# ທະນາຄານ ອາ ເຮັສ ບີ ລາວ ຈຳກັດ

## ເອກະສານລາຍງານການເງິນ
(ສອດຄ່ອງກັບມາດຕະຖານການລາຍງານການເງິນສາກົນ)

**31 ທັນວາ 2016**

www.pwc.com/la

## ສາລະບານ


| | ໜ້າ |
|---|---|
| ບົດລາຍງານສະພາຜູ້ບໍລິຫານ | 1 |
| ບົດລາຍງານຂອງຜູ້ກວດສອບອິດສະຫຼະ | 2-3 |
| ໃບສະຫລຸບຊັບສົມບັດ | 4 |
| ໃບລາຍງານຜົນໄດ້ຮັບເບັດເສັດ | 5 |
| ໃບລາຍງານການປ່ຽນແປງທຶນເຈົ້າຂອງ | 6 |
| ໃບລາຍງານກະແສເງິນສົດ | 7 |
| ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ | 8-47 |

ທະນາຄານ ອາ ເຮັສ ບີ ລາວ ຈຳກັດ

**ບົດລາຍງານສະພາຜູ້ບໍລິຫານ**
**ໃນວັນທີ 31 ທັນວາ 2016**

## ຄວາມຮັບຜິດຊອບຂອງສະພາຜູ້ບໍລິຫານ ຕໍ່ເອກະສານລາຍງານການເງິນ

ສະພາບໍລິຫານ ຂອງທະນາຄານ ອາ ເຮັສ ບີ ລາວ ຈຳກັດ (ທະນາຄານ) ມີໜ້າທີ່ຮັບຜິດຊອບຕໍ່ເອກະສານລາຍງານການເງິນ ເພື່ອໃຫ້ໝັ້ນໃຈວ່າເອກະສານລາຍງານການເງິນດັ່ງກ່າວໄດ້ສະແດງລາຍງານຖານະການເງິນຂອງ ທະນາຄານຢ່າງຖືກຕ້ອງ ໃນວັນທີ 31 ທັນວາ 2016 ແລະ ຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ກະແສເງິນສົດລວມທ້າຍປີ ສິ້ນສຸດວັນທີດຽວກັນ ໂດຍສອດຄ່ອງກັບ ມາດຕະຖານການລາຍງານການເງິນສາກົນ. ສະນັ້ນ, ໃນການກະກຽມເອກະສານລາຍງານການເງິນນີ້, ທາງ ສະພາຜູ້ບໍລິຫານຂອງທະນາຄານໄດ້ປະຕິບັດດັ່ງລຸ່ມນີ້:

i) ນຳໃຊ້ຫຼັກການບັນຊີທີ່ເໝາະສົມ, ເຊິ່ງໄດ້ຈາກການນຳໃຊ້ວິຈາລະນະຍານ ແລະ ການຄາດຄະເນ ຢ່າງສົມເຫດສົມຜົນ, ຮອບຄອບ ແລະ ນຳໃຊ້ຢ່າງຕໍ່ເນື່ອງ;

ii) ປະຕິບັດຕາມມາດຕະຖານການລາຍງານທາງການເງິນສາກົນ(IFRS), ແລະຮັບປະກັນວ່າ ສິ່ງເຫຼົ່ານີ້ໄດ້ຮັບການເປີດເຜີຍ, ອະທິບາຍ ແລະ ສະແດງອອກໃນເອກະສານລາຍງານການເງິນ ຢ່າງເໝາະສົມ;

iii) ເກັບຮັກສາເອກະສານຫຼັກຖານການບັນທຶກບັນຊີຢ່າງເໝາະສົມພຽງພໍແລະສ້າງລະບົບການຄວບຄຸມພາຍໃນໃຫ້ມີປະສິດທິພາບ

iv) ກະກຽມເອກະສານລາຍງານການເງິນ ບົນພື້ນຖານຫຼັກການຄວາມສືບເນື່ອງ ເວັ້ນເສຍແຕ່ວ່າບໍ່ມີຄວາມເໝາະສົມທີ່ ຈະຄາດຄະເນວ່າ ທະນາຄານຈະດຳເນີນການຕໍ່ໄປໃນອານາຄົດອັນໃກ້; ແລະ

v) ຄວບຄຸມ ແລະ ຊີ້ນຳທະນາຄານຢ່າງມີປະສິດທິພາບ ແລະ ເຂົ້າຮ່ວມ ໃນທຸກໆການຕັດສິນໃຈ ທີ່ມີສາລະສຳຄັນ ທີ່ມີຜົນກະທົບຕໍ່ການດຳເນີນງານ ແລະຜົນປະກອບການຂອງທະນາຄານ ແລະ ແນ່ໃຈວ່າເອກະສານລາຍງານການເງິນແມ່ນສອດຄ່ອງກັບຜົນໄດ້ຮັບຂອງການຕັດສິນໃຈດັ່ງກ່າວ.

ຄະນະຜູ້ບໍລິຫານຂອງທະນາຄານໄດ້ຢັ້ງຢືນວ່າ ທະນາຄານໄດ້ປະຕິບັດຢ່າງສອດຄ່ອງຕາມຂໍ້ກຳນົດຂ້າງເທິງນີ້ ໃນການສ້າງເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2016.

## ບົດລາຍງານຂອງຄະນະຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ

ພວກເຮົາຂໍຮັບຮອງວ່າ ເອກະສານລາຍງານການເງິນ ທີ່ໄດ້ສະແດງຖານະການເງິນຂອງທະນາຄານໃຫ້ ວັນທີ 31 ທັນວາ 2016 ແລະ ຜົນການດຳເນີນງານ, ການປ່ຽນແປງຂອງທຶນ ແລະ ໃບລາຍງານກະແສເງິນສົດສຳລັບປີສິ້ນສຸດວັນທີດຽວກັນ ໄດ້ເຮັດໄວ້ຢ່າງຖືກຕ້ອງ ແລະເໝາະສົມ ໂດຍສອດຄ່ອງຕາມມາດຕະຖານການລາຍງານການເງິນສາກົນ.

ໃນນາມຂອງຄະນະສະພາບໍລິຫານ

ແດນນີ ລີງ ຈີ ຮຽນ
ຜູ້ອຳນວຍການໃຫຍ່ ປະຈຳປະເທດລາວ

ວັນທີ 31 ມີນາ 2017

pwc

**ບົດລາຍງານຂອງຜູ້ກວດສອບອິດສະຫຼະ**

**ເຖິງ: ຜູ້ຖືຮຸ້ນ ແລະ ສະພາບໍລິຫານ ທະນາຄານ ອາ ເຮັສ ບີ ລາວ ຈຳກັດ**

**ຄວາມເຫັນ**

ພວກເຮົາມີຄວາມເຫັນວ່າ ເອກະສານລາຍງານການເງິນ ຂອງ ທະນາຄານ ອາ ເຮັສ ບີ ລາວ ຈຳກັດ (ທະນາຄານ) ນຳສະເໜີຢ່າງເປັນທຳ ກ່ຽວກັບສະຖານະທາງການເງິນຂອງທະນາຄານໃນວັນທີ 31 ທັນວາ 2016, ແລະ ຜົນການດຳເນີນງານ ແລະ ກະແສເງິນສົດ ສຳລັບປີສິ້ນສຸດວັນທີດຽວກັນ, ໂດຍສອດຄ່ອງກັບມາດຕະຖານລາຍງານການເງິນສາກົນ ໃນທຸກເນື້ອຫາທີ່ເປັນສາລະສຳຄັນ.

**ການກວດສອບຂອງພວກເຮົາມີດັ່ງນີ້:**

ເອກະສານລາຍງານການເງິນຂອງທະນາຄານປະກອບດ້ວຍ:

- ໃບສະຫຼຸບຊັບສິນບັດ ໃນວັນທີ 31 ທັນວາ 2016;
- ໃບລາຍງານຜົນໄດ້ຮັບເບັດເສັດ ສຳລັບທ້າຍປີສິ້ນສຸດດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງສຳລັບທ້າຍປີ;
- ໃບລາຍງານກະແສເງິນສົດສຳລັບ ທ້າຍປີ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ທີ່ສັງລວມຫຼັກການບັນຊີທີ່ເປັນສະລະສຳຄັນ.

**ພື້ນຖານໃນການສະແດງຄວາມເຫັນ**

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານດັ່ງກ່າວໄດ້ຖືກລະບຸໄວ້ໃນຫົວຂໍ້ໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບ ການກວດສອບເອກະສານລາຍງານການເງິນ ໃນບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫລັກຖານການກວດສອບທີ່ພວກເຮົາໄດ້ຮັບແມ່ນພຽງພໍ ແລະ ເຫມາະສົມເພື່ອເປັນພື້ນຖານສຳລັບການອອກຄວາມຄິດເຫັນຕໍ່ກັບເອກະສານລາຍງານການເງິນ.

**ຄວາມເປັນເອກະລາດ**

ພວກເຮົາມີຄວາມເປັນເອກະລາດ ຈາກທະນາຄານ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບອາຊີບນັກບັນຊີໃນສ່ວນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນທີ່ກຳນົດໂດຍຄະນະກຳມະການຈັນຍາບັນນານາຊາດ ສຳລັບນັກບັນຊີ (IESBA Code) ແລະ ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

**ຄວາມຮັບຜິດຊອບຂອງຜູ້ບໍລິຫານ ຕໍ່ເອກະສານລາຍງານການເງິນ**

ຜູ້ບໍລິຫານ ມີຄວາມຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນເຫຼົ່ານີ້ ໃຫ້ສອດຄ່ອງກັບມາດຕະຖານການລາຍງານສາກົນ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ບໍລິຫານໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກ ການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງທະນາຄານໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ບໍລິຫານມີຄວາມຕັ້ງໃຈທີ່ຈະຍຸບທະນາຄານ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການກວດສອບຊ່ວຍຜູ້ບໍລິຫານໃນການປະຕິບັດ ຄວາມຮັບຜິດຊອບໃນການເບິ່ງແຍງຂັ້ນຕອນໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ.

pwc

**ບົດລາຍງານຂອງຜູ້ກວດສອບອິດສະຫຼະ (ຕໍ່)**

**ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ**

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງຫຼື ຂໍ້ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ. ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບ ທີ່ພວກເຮົາໄດ້ຮັບ ແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ , ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ບໍລິຫານ.
- ສະຫລຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າປາສະຈາກຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງທະນາຄານ ຫຼືບໍ່, ຖ້າພວກເຮົາສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາ ໃນການເປີດເຜີຍທີ່ກ່ຽວຂ້ອງເທິງເອກະສານລາຍງານການເງິນ, ຫຼື  ຖ້າ ການເປີດເຜີຍດັ່ງກ່າວຫາກບໍ່ພຽງພໍ ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວຈິງໃນອານາຄົດອາດເປັນສາເຫດໃຫ້ທະນາຄານບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.
- ປະເມີນການນຳສະເໜີ, ໂຄງສ້າງ ແລະ ເນື້ອຫາຂອງເອກະສານລາຍງານການເງິນໂດຍລວມ, ເຊິ່ງລວມເຖິງການເປີດເຜີຍ, ພ້ອມທັງປະເມີນວ່າເອກະສານລາຍງານການເງິນໄດ້ສະແດງລາຍການ ແລະ ເຫດການໃນຮູບແບບທີ່ເຮັດໃຫ້ມີການນຳສະເໜີຂໍ້ມູນທີ່ຖືກຕ້ອງຕາມທີ່ຄວນ.

ພວກເຮົາໄດ້ແຈ້ງກັບຜູ້ບໍລິຫານກ່ຽວກັບເຫດການອື່ນໆ, ຂອບເຂດ ແລະ ຊ່ວງເວລາຂອງການກວດສອບທີ່ໄດ້ວາງແຜນໄວ້, ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍທີ່ມີສາລະສຳຄັນ ທີ່ຖືກພົບລະຫວ່າງການກວດສອບຂອງພວກເຮົາ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດຜູ້ດຽວ.

ສະກຸນາ ແຍ້ມສະກຸນ
ຮຸ້ນສ່ວນບໍລິສັດ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ 31 ມີນາ 2017

**ທະນາຄານ ອາ ເຮັສ ບີ ລາວ ຈຳກັດ**
**ໃບສະຫຼຸບຊັບສິນບັດ**
**ໃນວັນທີ 31 ທັນວາ 2016**

| | ບົດ ອະທິບາຍ | 2016 ກີບ | 2015 ກີບ |
|---|---|---|---|
| **ຊັບສິນ** | | | |
| ເງິນສົດ ແລະ ຍອດເຫຼືອກັບທະນາຄານກາງ | 5 | 459.488.220.174 | 142.640.300.590 |
| ເງິນຝາກກັບທະນາຄານອື່ນ | 6 | 59.130.917.698 | 23.743.546.574 |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 8 | 330.759.605.518 | 193.195.856.507 |
| ຊັບສິນບໍ່ມີຕົວຕົນ | 9 | 3.447.353.313 | 4.815.364.461 |
| ຊັບສິນຄົງທີ່ມີຕົວຕົນ | 10 | 15.111.143.900 | 13.693.098.735 |
| ຊັບສິນອື່ນໆ | 11 | 13.257.334.919 | 2.959.451.424 |
| ຊັບສິນອາກອນເຍື້ອນຊຳລະ | 12 | 32.429.933 | 462.570.063 |
| **ລວມຍອດຊັບສິນ** | | **881.227.005.455** | **381.510.188.354** |
| **ໜີ້ສິນ ແລະ ທຶນ** | | | |
| **ໜີ້ສິນ** | | | |
| ເງິນຝາກຈາກລູກຄ້າ | 13 | 43.131.460.646 | 36.511.538.191 |
| ເງິນຝາກຈາກທະນາຄານອື່ນ | 14 | 54.782.675.936 | - |
| ຈຳນວນເງິນຢືມຈາກບໍລິສັດແມ່ | 15 | 463.518.249.108 | 46.483.304.966 |
| ໜີ້ສິນອາກອນກຳໄລໝຸນວຽນ | 23 | 114.983.756 | - |
| ໜີ້ສິນອື່ນໆ | 16 | 15.913.307.081 | 1.180.095.851 |
| **ລວມຍອດໜີ້ສິນ** | | **577.460.676.527** | **84.174.939.008** |
| **ທຶນ** | | | |
| ທຶນຈົດທະບຽນຖອກແລ້ວ | 17 | 301.500.000.000 | 301.500.000.000 |
| ທຶນສຳຮອງຕາມກົດໝາຍ | 18 | 190.340.872 | - |
| ກຳໄລ/ (ຂາດທຶນສະສົມ) | | 2.075.988.056 | (4.164.750.654) |
| **ລວມຍອດທຶນ** | | **303.766.328.928** | **297.335.249.346** |
| **ລວມຍອດໜີ້ສິນ ແລະ ທຶນ** | | **881.227.005.455** | **381.510.188.354** |

ແດນນີ ລິງ ຈີ ຮຽນ
ຜູ້ອຳນວຍການໃຫຍ່ ປະຈຳປະເທດລາວ

ວັນທີ 31 ມີນາ 2017

ບົດອະທິບາຍຊ້ອນທ້າຍ ໜ້າ 9 ເຖິງ 47 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ, ລາຍງານຂອງຜູ້ກວດສອບອິດສະຫຼະໜ້າ 2-4.

**ທະນາຄານ ອາ ເຮັສ ບີ ລາວ ຈຳກັດ**
**ໃບລາຍງານຜົນໄດ້ຮັບເບັດເສັດ**
**ໃນວັນທີ 31 ທັນວາ 2016**

| | ບົດ ອະທິບາຍ | 2016 ກີບ | 2015 ກີບ |
|---|---|---|---|
| ລາຍຮັບດອກເບ້ຍ | | 34.921.883.221 | 13.822.316.031 |
| ລາຍຈ່າຍດອກເບ້ຍ | | (8.555.444.160) | (383.034.173) |
| **ລາຍຮັບດອກເບ້ຍ, ສຸດທິ** | 19 | **26.366.439.061** | **13.439.281.858** |
| ຄ່າເຊື່ອມມູນຄ່າຂອງເງິນໃຫ້ກູ້ຢືມ | 8 | (2.340.114.144) | (19.727.657) |
| **ລາຍຮັບດອກເບ້ຍສຸດທິຫຼັງຈາກຫັກຄ່າເຊື່ອມມູນຄ່າ** | | **24.026.324.917** | **13.419.554.201** |
| ລາຍຮັບຄ່າທຳນຽມ ແລະ ຄ່ານາຍໜ້າ | | 694.296.742 | 339.545.939 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ | | (175.520.560) | (145.132.981) |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິ** | 20 | **518.776.182** | **194.412.958** |
| ກຳໄລ/(ຂາດທຶນ), ສຸດທິຈາກການຊື້ຂາຍເງິນຕາຕ່າງປະເທດ ສຸດທິ | | (807.312.219) | 1.952.732.223 |
| ເງິນເດືອນ ແລະ ລາຍຈ່າຍອື່ນໆສຳລັບພະນັກງານ | 21 | (8.472.366.502) | (5.126.635.873) |
| ລາຍຈ່າຍບໍລິຫານ ແລະ ລາຍຈ່າຍທົ່ວໄປ | 22 | (4.438.245.599) | (3.745.431.065) |
| ຄ່າຫຼຸ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ | 9,10 | (3.850.973.311) | (3.658.793.667) |
| **ລວມລາຍຈ່າຍ** | | **(17.568.897.631)** | **(10.578.128.382)** |
| **ກຳໄລກ່ອນອາກອນ** | | **6.976.203.468** | **3.035.838.777** |
| ອາກອນກຳໄລ (ລາຍຈ່າຍ)/ຜົນປະໂຫຍດ | 23 | (545.123.886) | 271.366.505 |
| **ກຳໄລສຸດທິພາຍໃນປີ** | | **6.431.079.582** | **3.307.205.282** |
| ລາຍຮັບເບັດເສັດອື່ນ | | - | - |
| **ລວມກຳໄລເບັດເສັດສຳລັບປີ** | | **6.431.079.582** | **3.307.205.282** |

ທະນາຄານ ອາເຮັສບີ ລາວ ຈຳກັດ RHB Bank Lao Limited

ແດນນີ ລີງ ຈີ ຮຽນ
ຜູ້ອຳນວຍການໃຫຍ່ ປະຈຳປະເທດລາວ

ວັນທີ 31 ມີນາ 2017

ບົດອະທິບາຍຊ້ອນທ້າຍ ໜ້າ 9 ເຖິງ 47 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ, ລາຍງານຂອງຜູ້ກວດສອບອິດສະຫຼະໜ້າ 2-4.

**ທະນາຄານ ອາ ເຮັສ ບີ ລາວ ຈຳກັດ**
**ໃບລາຍງານການປ່ຽນແປງຂອງທຶນ**
**ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2016**

| | ທຶນຈົດທະບຽນ<br>ກີບ | ສຳຮອງຕາມກົດໝາຍ<br>ກີບ | ຂາດທຶນສະສົມ<br>ກີບ | ລວມ<br>ກີບ |
|---|---|---|---|---|
| ວັນທີ 1 ມັງກອນ 2015 | 301.500.000.000 | - | (7.471.955.936) | 294.028.044.064 |
| ກຳໄລສຸດທິພາຍໃນປີ | - | - | 3.307.205.282 | 3.307.205.282 |
| **ວັນທີ 31 ທັນວາ 2015** | **301.500.000.000** | - | **(4.164.750.654)** | **297.335.249.346** |
| ວັນທີ 1 ມັງກອນ 2016 | **301.500.000.000** | - | **(4.164.750.654)** | **297.335.249.346** |
| ກຳໄລສຸດທິພາຍໃນປີ | - | - | 6.431.079.582 | 6.431.079.582 |
| ສຳຮອງຕາມກົດໝາຍ | | 190.340.872 | (190.340.872) | - |
| **ວັນທີ 31 ທັນວາ 2016** | **301.500.000.000** | **190.340.872** | **2.075.988.056** | **303.766.328.928** |

ແດນນີ ລີງ ຈີ ຣຽນ
ຜູ້ອຳນວຍການໃຫຍ່ ປະຈຳປະເທດລາວ

ວັນທີ 31 ມີນາ 2017

ບົດອະທິບາຍຊ້ອນທ້າຍ ໜ້າ 9 ເຖິງ 47 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ, ລາຍງານຂອງຜູ້ກວດສອບອິດສະຫຼະໜ້າ 2-4.

**ທະນາຄານ ອາ ເຮັສ ບີ ລາວ ຈໍາກັດ**
**ໃບລາຍງານກະແສເງິນສົດ**
**ສໍາລັບປີສິ້ນສຸດ ວັນທີ 31 ທັນວາ 2016**

| | ບົດ ອະທິບາຍ | 2016 ກີບ | 2015 ກີບ |
|---|---|---|---|
| **ກິດຈະກໍາການດໍາເນີນງານ** | | | |
| ກໍາໄລກ່ອນອາກອນກໍາໄລ | | 6.976.203.468 | 3.035.838.777 |
| *ລາຍການປັບປຸງ:* | | | |
| ຫັກຄ່າຫຼູ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ | 9,10 | 3.850.973.311 | 3.658.793.667 |
| ຫັກຄ່າເຊື່ອມເງິນໃຫ້ກູ້ຢືມ | 8 | 2.340.114.144 | 19.727.657 |
| (ກໍາໄລ)/ຂາດທຶນ ຈາກການຊື້ຂາຍ ເງິນຕາຕ່າງປະເທດ,ສຸດທິ | | 807.312.219 | (1.952.732.223) |
| ລາຍຮັບດອກເບ້ຍ | 17 | (34.921.883.221) | (13.822.316.031) |
| ລາຍຈ່າຍດອກເບ້ຍ | 17 | 8.555.444.160 | 383.034.173 |
| **ກະແສເງິນສົດຈາກກໍາໄລຈາກການດໍາເນີນງານກ່ອນການປ່ຽນແປງ ຊັບສິນ ແລະ ໜີ້ສິນໃນການດໍາເນີນງານ** | | **(12.391.835.919)** | **(8.677.653.980)** |
| ຫຼຸດລົງຂອງເງິນຝາກຕາມລະບຽບການກັບທະນາຄານ ສປປ ລາວ | 5 | 57.426.184.122 | 132.396.411.879 |
| ການເພີ່ມຂຶ້ນຂອງເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | (138.515.431.880) | (111.980.467.061) |
| ການເພີ່ມຂຶ້ນຂອງຊັບສິນອື່ນໆ | | (523.011.072) | (207.196.909) |
| ການເພີ່ມຂຶ້ນໃນເງິນຝາກຈາກລູກຄ້າ | 13 | 6.601.214.346 | 28.395.672.600 |
| ການເພີ່ມຂຶ້ນໃນເງິນຝາກຈາກທະນາຄານ | | 54.000.979.125 | - |
| ຍອດເພີ່ມຂຶ້ນຈາກບໍລິສັດແມ່ | 14 | 418.577.940.000 | 12.233.684.151 |
| ການເພີ່ມຂຶ້ນ/(ຫຼຸດລົງ)ຂອງໜີ້ສິນອື່ນໆ | | 15.860.484.649 | (2.608.961.417) |
| ດອກເບ້ຍຮັບ | | 23.088.388.459 | 13.110.104.104 |
| ດອກເບ້ຍຈ່າຍ | | (1.407.780.118) | (287.179.854) |
| **ເງິນສົດສຸດທິ ທີ່ໃຊ້ໃນກິດຈະກໍາການດໍາເນີນງານ** | | **422.717.131.712** | **62.374.413.513** |
| **ກິດຈະກໍາການລົງທຶນ** | | | |
| ຊື້ຊັບສິນຄົງທີ່ມີຕົວຕົນ* | | (3.901.007.328) | - |
| ຊື້ຊັບສິນບັດຄົງທີ່ບໍ່ມີຕົວຕົນ* | | - | (426.883.281) |
| **ເງິນສົດສຸດທິ ທີ່ໃຊ້ໃນກິດຈະກໍາການລົງທຶນ** | | **(3.901.007.328)** | **(426.883.281)** |
| **ກິດຈະກໍາທາງການເງິນ** | | | |
| ການເພີ່ມທຶນລະຫວ່າງບໍລິສັດ | | - | 1.293.585.396 |
| ການຊໍາລະຄືນລະຫວ່າງບໍລິສັດ | | (7.726.320.861) | (2.036.830.196) |
| **ເງິນສົດສຸດທິ ທີ່ເກີດຈາກກິດຈະກໍາທາງການເງິນ** | | **(7.726.320.861)** | **(743.244.800)** |
| ການເພີ່ມຂຶ້ນສຸດທິຂອງເງິນສົດ ແລະ ລາຍການທຽບເທົ່າເງິນສົດ | | 411.089.803.523 | 61.204.285.432 |
| ເງິນສົດ ແລະ ລາຍການທຽບເທົ່າເງິນສົດ, ໃນຕົ້ນປີ | 7 | 104.907.605.585 | 43.183.373.284 |
| ຜົນກະທົບຈາກສ່ວນຕ່າງອັດຕາແລກປ່ຽນເງິນຕາ | | (1.428.328.693) | 519.946.869 |
| **ເງິນສົດ ແລະ ລາຍການທຽບເທົ່າເງິນສົດ,ໃນຕອນທ້າຍ** | 7 | **514.569.080.415** | **104.907.605.585** |

* ການຊື້ຊັບສິນຄົງທີ່ມີຕົວຕົນ ແລະ ຊັບສິນຄົງທີ່ບໍ່ມີຕົວຕົນ ດ້ວຍເງິນສົດທັງໝົດ ໃນປີ ແມ່ນ 3.901.007.328 ກີບ (2015: 426.883.281 ກີບ) ໄດ້ຊໍາລະໝົດພາຍໃນປີ 2016. ໃນປີ 2015 ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ ກ່ຽວຂ້ອງກັບຕົ້ນທຶນຂອງການໄດ້ມາຊັບສິນຄົງທີ່ ແຕ່ບໍ່ໄດ້ຊໍາລະໃນວັນທີ 31 ທັນວາ 2015 ຈໍານວນ 659.813.513 ກີບ.

ແດນນີ ລີງ ຈີ ຮຽນ
ຜູ້ອໍານວຍການໃຫຍ່ ປະຈໍາປະເທດລາວ

ວັນທີ 31 ມີນາ 2017
ບົດອະທິບາຍຊ້ອນທ້າຍ ໜ້າ 9 ເຖິງ 47 ແມ່ນເປັນສ່ວນໜຶ່ງຂອງ ເອກະສານລາຍງານການເງິນ, ລາຍງານຂອງຜູ້ກວດສອບອິດສະຫຼະໜ້າ 2-4.

## 1. ຂໍ້ມູນທົ່ວໄປ

ທະນາຄານ ອາ ເຮັສ ບີ ລາວ ຈຳກັດ (“ທະນາຄານ”) ແມ່ນທະນາຄານການຄ້າ ເຊິ່ງສ້າງຕັ້ງ ແລະ ຈົດທະບຽນໃນ ສປປ ລາວ.

ທະນາຄານເປັນທຸລະກິດລົງທຶນຈາກຕ່າງປະເທດ 100% ແລະ ດຳເນີນກິດຈະການພາຍໃຕ້ກົດໝາຍຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປ ລາວ”) ທະນາຄານໄດ້ດຳເນີນການພາຍໃຕ້ກົດໝາຍທະນາຄານທຸລະກິດ ເລກທີ 03/ ສພຊ ລົງວັນທີ 26 ທັນວາ 2006 ແລະ ກົດລະບຽບຂອງທະນາຄານແຫ່ງ ສປປ ລາວ. ເຊິ່ງໄດ້ຮັບໃບທະບຽນວິສາຫະກິດ ເລກທີ 10/ທຫລ ອອກໃຫ້ໂດຍທະນາຄານແຫ່ງ ສປປ ລາວ ("ທຫລ") ແລະ ໃບອະນຸຍາດດຳເນີນທຸລະກິດ ເລກທີ 213/ຈທວ ລົງວັນທີ 30 ພຶດສະພາ 2014.

ວຽກງານຕົ້ນຕໍຂອງທະນາຄານ ແມ່ນໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.

ສຳນັກງານຂອງທະນາຄານຕັ້ງຢູ່ ໜ່ວຍທີ 1, ບ້ານເລກທີ 008, ຖະໜົນໄກສອນ, ບ້ານ ໂພນສະອາດ,ນະຄອນຫຼວງວຽງຈັນ ສປປ ລາວ.

ຄະນະກຳມະການຜູ້ບໍລິຫານຂອງທາງທະນາຄານໄດ້ມີການກວດກາເອກະສານລາຍງານການເງິນເຫຼົ່ານີ້ ແລະ ໄດ້ອະນຸມັດໃນວັນທີ 31 ມີນາ 2017.

ອີງຕາມການແຈ້ງການຂອງທະນາຄານແຫ່ງ ສປປ ລາວ ເລກທີ 35/ທຫທ ລົງວັນທີ 21 ກັນຍາ 2011 ໄດ້ຮຽກຮ້ອງໃຫ້ທະນາຄານຢູ່ໃນ ສປປ ລາວ ກະກຽມເອກະສານລາຍງານການເງິນ ແຍກຕ່າງຫາກ ທີ່ອີງຕາມມາດຕະຖານ ການລາຍງານການເງິນສາກົນ (IFRS) ນອກຈາກທີ່ກຳນົດໄວ້, ທະນາຄານຍັງຕ້ອງໄດ້ກະກຽມເອກະສານລາຍງານການເງິນໃຫ້ສອດຄ່ອງກັບນະໂຍບາຍຂອງທະນາຄານ ແລະ ລະບຽບການຂອງທະນາຄານ ແຫ່ງ ສປປ ລາວ ແລະ ແຈ້ງການອື່ນໆທີ່ກ່ຽວຂ້ອງ.

## 2. ສະຫຼຸບລວມນະໂຍບາຍການບັນຊີທີ່ສຳຄັນ

ວິທີການບັນຊີທີ່ສຳຄັນໄດ້ຖືກຮັບຮອງເພື່ອກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້: ນະໂຍບາຍເຫຼົ່ານີ້ໄດ້ຖືກນຳໃຊ້ທຸກໆປີຢ່າງຕໍ່ເນື່ອງ, ເວັ້ນເສຍແຕ່ໄດ້ລະບຸເປັນຢ່າງອື່ນ.

### 2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນໄດ້ຖືກສ້າງຂຶ້ນໂດຍສອດຄ່ອງກັບມາດຕະຖານການລາຍງານການເງິນສາກົນ (“IFRS”) ເຊິ່ງອອກ ໂດຍ IASB ແລະ ການແປຄວາມໝາຍ (IFRIC). ຂໍ້ມູນເພີ່ມເຕີມຕາມກົດລະບຽບຂອງ ສປປ ລາວ ຈະສະແດງຢູ່ຕາມຄວາມເໝາະສົມ.

ເອກະສານລາຍງານການເງິນປະກອບມີ ໃບລາຍງານຜົນໄດ້ຮັບ ແລະ ລາຍຮັບເບັດເສັດອື່ນ, ໃບສະຫຼຸບຊັບສົມບັດ, ໃບລາຍງານສ່ວນປ່ຽນແປງຂອງທຶນ, ໃບລາຍງານກະແສເງິນສົດ ແລະ ບັນດາບົດອະທິບາຍຊ້ອນທ້າຍ. ເອກະສານລາຍງານການເງິນຂອງທະນາຄານແມ່ນໄດ້ຖືກກະກຽມພາຍໃຕ້ຫຼັກການໃນການບັນທຶກໂດຍອີງຕາມມູນຄ່າຕົ້ນທຶນເດີມ.

ໃບລາຍງານກະແສເງິນສົດໄດ້ສະແດງເຖິງການປ່ຽນແປງໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທີ່ເກີດຂຶ້ນລະຫວ່າງໄລຍະຈາກກິດຈະກຳການດຳເນີນງານ, ກິດຈະກຳການລົງທຶນ, ແລະ ກິດຈະກຳທາງການເງິນ. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ແມ່ນລວມການລົງທຶນທີ່ມີສະພາບຄ່ອງທາງການເງິນສູງ. ບົດອະທິບາຍຂໍ້ທີ 6 ໄດ້ສະແດງໃຫ້ເຫັນເຖິງລາຍການໃດທີ່ລວມຢູ່ໃນໃບສະຫຼຸບຊັບສົມບັດ ເຊິ່ງແມ່ນລາຍການເງິນສົດ ແລະ ລາຍການທຽບເທົ່າເງິນສົດລວມຢູ່ນຳ.

ກະແສເງິນສົດຈາກກິດຈະກຳການດຳເນີນງານ ຈະຖືກສະແດງໂດຍໃຊ້ວິທີການທາງອ້ອມ. ກຳໄລສຸດທິຈະຖືກປັບປຸງໂດຍລາຍການທີ່ບໍ່ແມ່ນເງິນສົດ ເຊັ່ນ ກຳໄລ ຫຼື ຂາດທຶນຈາກອັດຕາແລກປ່ຽນ, ການປ່ຽນແປງໃນການສຳຮອງ ເຊັ່ນການປ່ຽນແປງ ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງ. ລາຍຮັບດອກເບ້ຍ ແມ່ນຈັດປະເພດເປັນກະແສເງິນສົດຈາກການດຳເນີນງານ.

## 2. ສະຫຼຸບລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.1 ພື້ນຖານໃນການກະກຽມ (ຕໍ່)

ການກະກຽມເອກະສານລາຍງານການເງິນ ກຳນົດໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ສົມມຸດຕິຖານ ທີ່ມີຜົນກະທົບຕໍ່ມູນຄ່າ ຂອງຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ຕໍ່ການເປີດເຜີຍກ່ຽວກັບຊັບສິນ ແລະ ໜີ້ສິນ ທີ່ອາດເກີດຂຶ້ນໃນວັນທີ່ຂອງເອກະສານລາຍງານການເງິນ ແລະ ຕໍ່ຈຳນວນຂອງລາຍຮັບ ແລະ ລາຍຈ່າຍໃນໄລຍະການລາຍງານ. ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນໄດ້ອີງໃສ່ຄວາມຮູ້ທີ່ດີທີ່ສຸດຂອງເຫດການ ແລະ ການປະຕິບັດປັດຈຸບັນ ຂອງຜູ້ບໍລິຫານ, ຜົນໄດ້ຮັບຕົວຈິງອາດຈະມີຄວາມແຕກຕ່າງຈາກການປະເມີນການທີ່ໄດ້ມີການຄາດຄະເນໄວ້.

(ກ) ມາດຕະຖານ ແລະ ການດັດແກ້ໃໝ່ ທີ່ມີຜົນບັງຄັບໃຊ້ ຄັ້ງທຳອິດສຳລັບຊ່ວງໄລຍະຫຼັງຈາກ 1 ມັງກອນ 2016 ມີດັ່ງນີ້:

ມາດຕະຖານ ແລະ ການຕີຄວາມມາດຕະຖານບັນຊີໃໝ່ ແລະ ສະບັບທີ່ມີການປັບປຸງ ເຊິ່ງມີຜົນບັງຄັບໃຊ້ສຳລັບຮອບໄລຍະເວລາບັນຊີທີ່ເລີ່ມໃນ ຫຼື ຫຼັງວັນທີ 1 ມັງກອນ 2016 ການປ່ຽນແປງຂອງມາດຕະຖານການບັນຊີ ແລະ ການຕີຄວາມບັນຊີເຫຼົ່ານີ້ບໍ່ມີຜົນກະທົບຢ່າງມີສາລະສຳຄັນຕໍ່ເອກະສານລາຍງານການເງິນຂອງທະນາຄານ ກຸ່ມມາດຕະຖານການບັນຊີສະບັບໃໝ່ ແລະ ສະບັບທີ່ມີການປັບປຸງ ແລະ ການຕີຄວາມການບັນຊີທີ່ມີຜົນກະທົບຕໍ່ທະນາຄານມີດັ່ງຕໍ່ໄປນີ:

- *ການປັບປຸງມາດຕະຖານການບັນຊີສາກົນ ສະບັບທີ 1 (IAS1) ເລື່ອງການນຳສະເໜີໃນເອກະສານລາຍງານການເງິນ ກ່ຽວກັບການເປີດເຜີຍຂໍ້ມູນ* ເຊິ່ງແກ້ໄຂຂໍ້ຈຳກັດຂອງ ຜູ້ກະກຽມເອກະສານລາຍງານການເງິນ ໃນການນຳໃຊ້ວິຈາລະນະຍານໃນການນຳສະເໜີບົດລາຍງານການເງິນ

- *ການປັບປຸງມາດຕະຖານການບັນຊີສາກົນ ສະບັບທີ 16 ແລະ 38 (IAS16 and IAS38) ເລື່ອງການໃຫ້ຄວາມຈະແຈ້ງກ່ຽວກັບວິທີຄິດໄລ່ຄ່າຫລຸ້ຍຫ້ຽນ ແລະ ການແບ່ງຈ່າຍ* ໂດຍກຳນົດວ່າການຄິດໄລ່ຫລຸ້ຍຫ້ຽນຂອງຊັບສິນ ແລະ ອຸປະກອນ ໂດຍອີງຕາມລາຍໄດ້ທີ່ເກີດຂຶ້ນຈາກກິດຈະກຳໃດໜຶ່ງເຊິ່ງລວມມີການນຳໃຊ້ຊັບສິນໃດໜຶ່ງນັ້ນ ແມ່ນບໍ່ເໝາະສົມ.

- *ການປັບປຸງປະຈຳປີຕໍ່ IFRSs ຮອບວຽນ 2012 - 2014*

ການນຳໃຊ້ບັນດາການປັບປຸງເຫຼົ່ານັ້ນ ແມ່ນບໍ່ໄດ້ສົ່ງຜົນກະທົບໃດໆຕໍ່ກັບລາຍງານໃນປີ ຫຼື ປີຜ່ານມາ ຕະຫຼອດເຖິງອະນາຄົດ.

(ຂ) ມາດຕະຖານ ແລະ ການຕີຄວາມທີ່ອອກມາແຕ່ບໍ່ໄດ້ມີການບັງຄັບໃຊ້ໃນລາຍງານປະຈຳປີ ສຳລັບໄລຍະສິ້ນສຸດວັນທີ 31 ທັນວາ 2016 ແມ່ນມີດັ່ງລຸ່ມນີ້:

ມີບາງມາດຕະຖານການບັນຊີ ແລະ ການຕີຄວາມມາດຕະຖານການບັນຊີສະບັບໃໝ່ ໄດ້ມີການປະກາດໃຊ້ ແຕ່ຍັງບໍ່ມີຜົນບັງຄັບໃຊ້ສຳລັບຮອບໄລຍະເວລາບັນຊີສິ້ນສຸດວັນທີ 31 ທັນາ 2016 ແລະ ທະນາຄານເອງກໍ່ບໍ່ໄດ້ນຳມາດຕະຖານທີ່ປັບປຸງ ໃໝ່ດັ່ງກ່າວມາຖືປະຕິບັດກ່ອນວັນບັງຄັບໃຊ້. ບັນດາມາດຕະຖານການບັນຊີສະບັບໃໝ່, ການປັບປຸງ ແລະ ການຕີຄວາມມາດຕະຖານການບັນຊີ ທີ່ກ່ຽວຂ້ອງກັບທະນາຄານດັ່ງຕໍ່ໄປນີ້:

- *ການປັບປຸງ ມາດຕະຖານການບັນຊີສາກົນສະບັບທີ 7 (IAS7) ເລື່ອງການນຳສະເໜີໃນເອກະສານລາຍງານການເງິນກ່ຽວກັບຫຼັກການຂອງການເປີດເຜີຍຂໍ້ມູນ* ເຊິ່ງຊີ້ແຈງວ່າ ກິດຈະການເປີດເຜີຍຂໍ້ມູນທີ່ເຮັດໃຫ້ຜູ້ໃຊ້ເອກະສານລາຍງານການເງິນສາມາດປະເມີນການປ່ຽນແປງຂອງໜີ້ສິນທີ່ເກີດຈາກກິດຈະກຳຈັດຫາເງິນ. ການປັບປຸງນີ້ມີຜົນບັງຄັບໃຊ້ສຳລັບຮອບໄລຍະເວລາບັນຊີທີ່ເລີ່ມໃນ ຫຼື ຫຼັງວັນທີ 1 ມັງກອນ 2017.

## 2. ສະຫຼຸບລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.1 ພື້ນຖານໃນການກະກຽມ (ຕໍ່)

- ການປັບປຸງມາດຕະຖານການບັນຊີ*ສາກົນສະບັບທີ 12 (IAS12)* ອາກອນລາຍໄດ້ ສຳລັບການຮັບຮູ້ຊັບສິນອາກອນເບື່ອນຊຳລະທີ່ເກີດຈາກຂາດທຶນທີ່ຍັງບໍ່ທັນຖືກຮັບຮູ້ ເຊິ່ງລະບຸວ່າ ຜົນແຕກຕ່າງຊົ່ວຄາວທີ່ສາມາດຫັກໄດ້ອາດເກີດຂຶ້ນຈາກຂາດທຶນທີ່ຍັງບໍ່ຮັບຮູ້ ຂອງເຄື່ອງມືໜີ້ສິນທີ່ຖືກປະເມີນມູນຄ່າຍຸດຕິທຳ ແລະ ປະເມີນຕາມລາຄາຕົ້ນທຶນເພື່ອຈຸດປະສົງກ່ຽວກັບອາກອນ ບໍ່ວ່າຜູ້ຖືເຄື່ອງມືໜີ້ສິນຈະຄາດຄະເນວ່າຈະໄດ້ຮັບຄືນຕາມມູນຄ່າທີ່ຄາດວ່າຈະໄດ້ຮັບ,ໂດຍການຂາຍ ຫຼື ການນຳໃຊ້ກໍ່ຕາມ. ການປັບປຸງມາດຕະຖານສະບັບນີ້ມີຜົນບັງຄັບໃຊ້ສຳລັບຮອບໄລຍະເວລາບັນຊີໃນ ຫຼື ຫຼັງວັນທີ 1 ມັງກອນ 2017.

- ມາດຕະຖານການລາຍງານທາງການເງິນສາກົນສະບັບທີ 9 (IAS9) ເຄື່ອງມືທາງການເງິນ ເຊິ່ງແກ້ໄຂບັນຫາກ່ຽວກັບການຈັດປະເພດລາຍການ, ການປະເມີນມູນຄ່າ ແລະ ການຕັດອອກຈາກບັນຊີ ຂອງຊັບສິນທາງການເງິນ ແລະໜີ້ສິນທາງການເງິນ ໂດຍນຳສະເໜີຂໍ້ກຳນົດໃໝ່ສຳລັບການບັນຊີປ້ອງກັນຄວາມສ່ຽງ ແລະ ວິທີການຄິດໄລ່ການດ້ອຍຄ່າຂອງຊັບສິນທາງການເງິນ. ມາດຕະຖານລາຍງານທາງການເງິນ ສະບັບທີ 9 ກຳນົດວິທີການປະຕິບັດທາງບັນຊີ ກ່ຽວກັບເຄື່ອງມືທາງການເງິນ ເມື່ອເປັນສະບັບສຸດທ້າຍແລ້ວ ຈະນຳມາໃຊ້ແທນຂໍ້ກຳນົດໃນມາດຕະຖານການບັນຊີສະບັບທີ 39 ເຄື່ອງມືທາງການເງິນ: ການຮັບຮູ້ ແລະ ການປະເມີນມູນຄ່າ ແລະຈະມີຜົນບັງຄັບໃຊ້ສຳລັບຮອບໄລຍະເວລາບັນຊີທີ່ເລີ່ມໃນ ຫຼື ຫຼັງວັນທີ 1 ມັງກອນ 2018. ໃນຂະນະທີ່ການປັບປຸງມາດຕະຖານການລາຍງານທາງການເງິນສະບັບທີ 9 ກ່ຽວກັບການບັນຊີປ້ອງກັນຄວາມສ່ຽງຈະມີຜົນບັງຄັບໃຊ້ສຳລັບຮອບໄລຍະເວລາບັນຊີເລີ່ມໃນ ຫຼື ຫຼັງວັນທີ 1 ມັງກອນ 2018 ຫຼື ປະກາດໃນພາຍຫຼັງ.

- ມາດຕະຖານການລາຍງານທາງການເງິນສາກົນ ສະບັບທີ 16 (IAS16) ສັນຍາເຊົ່າ ມີການລະບຸຢ່າງຈະແຈ້ງກ່ຽວກັບວິທີການຮັບຮູ້ ການປະເມີນມູນຄ່າ ແລະ ການສະແດງລາຍການຂອງສັນຍາເຊົ່າໃນໃບລາຍງານຊັບສົມບັດ. ສິ່ງນີ້ຈະສົ່ງຜົນກະທົບໃຫ້ສັນຍາເຊົ່າເກືອບທັງໝົດຖືກຮັບຮູ້ ໃນໃບລາຍງານຊັບສົມບັດ ເນື່ອງຈາກວ່າ ການຈຳແນກປະເພດຂອງສັນຍາ ລະຫວ່າງ ເຊົ່າດຳເນີນງານ ແລະສັນຍາເຊົ່າທາງການເງິນ ຈະຖືກຍົກເລີກ. ພາຍໃຕ້ມາດຕະຖານການບັນຊີໃໝ່ນີ້ ຊັບສິນ (ສິດໃນການຊົມໃຊ້ຊັບສິນ) ແລະ ໜີ້ສິນທາງການເງິນ ເພື່ອຈ່າຍຄ່າເຊົ່າ ຈະຖືກຮັບຮູ້ໃນເອກະສານລາຍງານການເງິນ. ຈະຍົກເວັ້ນໃຫ້ພຽງສັນຍາເຊົ່າໄລຍະສັ້ນ ແລະ ສັນຍາທີ່ມີມູນຄ່າຕໍ່າ. ການປັບປຸງນີ້ມີຜົນບັງຄັບໃຊ້ສຳລັບຮອບໄລຍະເວລາບັນຊີທີ່ເລີ່ມໃນ ຫຼື ຫຼັງວັນທີ 1 ມັງກອນ 2019.

ນອກຈາກທີ່ກ່າວມາຂ້າງເທິງ ບໍ່ມີມາດຕະຖານອື່ນໆທີ່ຍັງບໍ່ມີຜົນບັງຄັບໃຊ້ ແລະ ທີ່ຄາດວ່າຈະມີຜົນກະທົບທີ່ເປັນສາລະສຳຄັນຕໍ່ກັບເອກະສານລາຍງານການເງິນ.

### 2.2. ການປະເມີນມູນຄ່າ ແລະ ສະກຸນເງິນທີ່ນຳສະເໜີ

ກ. ສະກຸນເງິນຫຼັກທີ່ນຳໃຊ້ ແລະ ສະກຸນເງິນທີ່ນຳສະເໜີ

ລາຍການທີ່ລວມຢູ່ໃນເອກະສານລາຍງານການເງິນຂອງທະນາຄານ ແມ່ນວັດແທກມູນຄ່າໂດຍນຳໃຊ້ ສະກຸນເງິນກີບ ເຊິ່ງເປັນສະກຸນເງິນຫຼັກທາງເສດຖະກິດໃນການປະຕິບັດງານຂອງທະນາຄານ (ສະກຸນເງິນຫຼັກ). ເອກະສານລາຍງານການເງິນຂອງທະນາຄານແມ່ນນຳສະເໜີເປັນ ສະກຸນເງິນກີບ (ສະກຸນເງິນທີ່ນຳສະເໜີ) ຂອງທະນາຄານ.

ຂ. ລາຍການເຄື່ອນໄຫວ ແລະ ຍອດເຫຼືອ

ບັນດາລາຍການເຄື່ອນໄຫວທີ່ເປັນສະກຸນເງິນຕາຕ່າງປະເທດຈະຖືກປ່ຽນຄ່າເປັນສະກຸນເງິນຫຼັກທາງເສດຖະກິດ ໂດຍໃຊ້ອັດຕາແລກປ່ຽນໃນວັນທີ ທີ່ມີລາຍການນັ້ນເກີດຂຶ້ນ. ກຳໄລ ແລະ ຂາດທຶນ ຈາກອັດຕາແລກປ່ຽນ ຂອງບັນດາລາຍການຈາກອັດຕາແລກປ່ຽນໃນທ້າຍປີ ຂອງ ຊັບສິນ ແລະ ໜີ້ສິນ ໃນສະກຸນເງິນຕາຕ່າງປະເທດແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບແບບເບັດເສັດ ກຳໄລ ແລະ ຂາດທຶນທັງໝົດຈາກອັດຕາແລກປ່ຽນແມ່ນໄດ້ສະແດງໃຫ້ເຫັນຢູ່ໃນໃບລາຍງານຜົນໄດ້ຮັບແບບເບັດເສັດເປັນ "ກຳໄລ/ຂາດທຶນສຸດທິຈາກອັດຕາແລກປ່ຽນ" ການແປງຄ່າໂດຍໃຊ້ອັດຕາແລກປ່ຽນທ້າຍປີບໍ່ສາມາດໃຊ້ກັບລາຍການທີ່ບໍ່ແມ່ນເງິນທີ່ມີການວັດແທກໂດຍມູນຄ່າເດີມ.

## 2. ສະຫຼຸບລວມນະໂຍບາຍການບັນຊີທີ່ສໍາຄັນ (ຕໍ່)

### 2.3 ເຄື່ອງມືທາງການເງິນ

ອີງຕາມ IAS 39, ຊັບສິນ ແລະ ໜີ້ສິນທາງດ້ານການເງິນທັງໝົດ ໄດ້ຮັບຮູ້ໃນໃບສະຫລຸບຊັບສິນຂອງທະນາຄານ ແລະ ການປະເມີນໂດຍອີງຕາມປະເພດຂອງລາຍການ.

#### 2.3.1 ຊັບສິນທາງການເງິນ

ຊັບສິນທາງດ້ານການເງິນຂອງທະນາຄານທີ່ສໍາຄັນໄດ້ແກ່ເງິນສົດ ແລະ ຍອດເງິນກັບທະນາຄານກາງ, ເງິນຝາກກັບທະນາຄານອື່ນ ແລະ ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ.

*ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບ*

ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບຈາກລູກຄ້າແມ່ນໄດ້ຮັບຮູ້ເບື້ອງຕົ້ນໃນມູນຄ່າຍຸດຕິທໍາ ເຊິ່ງແມ່ນພິຈາລະນາຈາກມູນຄ່າເງິນສົດ ຫຼື ມູນຄ່າຊື້ເງິນໃຫ້ກູ້ຢືມ ລວມລາຍຈ່າຍທີ່ເກີດຂຶ້ນ ແລະ ວັດແທກມູນຄ່າພາຍຫຼັງໂດຍຕົ້ນທຶນຕັດຈໍາໜ່າຍໂດຍໃຊ້ວິທີອັດຕາດອກເບ້ຍທີ່ມີປະສິດທິຜົນ. ເງິນໃຫ້ກູ້ຢືມ ແລະ ໜີ້ຕ້ອງຮັບຈາກລູກຄ້າ ແມ່ນໄດ້ຖືກລາຍງານໃນໃບສະຫລຸບຊັບສິນຂອງທະນາຄານ ເປັນ 'ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ'. ດອກເບ້ຍຂອງເງິນໃຫ້ກູ້ຢືມແມ່ນໄດ້ລວມ ແລະ ລາຍງານເປັນ 'ລາຍຮັບດອກເບ້ຍ ແລະ ລາຍຮັບປະເພດດຽວກັນ'. ໃນກໍລະນີ ຂອງຄ່າເຊື່ອມມູນຄ່ານັ້ນ, ການສູນເສຍຈາກການເຊື່ອມມູນຄ່າແມ່ນໄດ້ລາຍງານເປັນການຫັກຈາກມູນຄ່າຂອງເງິນໃຫ້ກູ້ຢືມ ແລະ ຮັບຮູ້ໃນໃບລາຍງານຜົນໄດ້ຮັບເບັດເສັດ ເປັນ 'ລາຍຈ່າຍໃນຄ່າເຊື່ອມມູນຄ່າຂອງເງິນໃຫ້ກູ້ຢືມ'.

#### 2.3.2 ໜີ້ສິນທາງການເງິນ

ໜີ້ສິນທາງການເງິນທີ່ສໍາຄັນຂອງທະນາຄານແມ່ນຈໍານວນເງິນຝາກຈາກບໍລິສັດແມ່ ແລະ ເງິນຝາກຈາກລູກຄ້າ.

ໜີ້ສິນທາງການເງິນທີ່ບໍ່ໄດ້ຖືກຈໍາແນກຕາມມູນຄ່າຍຸດຕິທໍາ ຜ່ານກໍາໄລ ຫຼື ຂາດທຶນ ຕົກຢູ່ໃນປະເພດນີ້ ແລະ ໄດ້ປະເມີນຕາມຕົ້ນທຶນທີ່ໄດ້ລຶບລ້າງ. ໜີ້ສິນທາງການເງິນທີ່ປະເມີນຕາມຕົ້ນທຶນທີ່ລຶບລ້າງ ແມ່ນເງິນຝາກຈາກບໍລິສັດແມ່ ແລະ ເງິນຝາກຈາກລູກຄ້າ.

#### 2.3.3 ການຕັດບັນຊີ

ຊັບສິນທາງການເງິນຖືກຕັດບັນຊີເມື່ອສັນຍາກ່ຽວກັບສິດຮັບກະແສເງິນສົດຈາກຊັບສິນເຫຼົ່ານີ້ໄດ້ສິ້ນສຸດ ຫຼື ຊັບສິນໄດ້ຖືກໂອນ ແລະ ມີຄວາມສ່ຽງຫຼາຍ ແລະ ຜູ້ຮັບຜົນຂອງຊັບສິນຖືກໂອນເຊັ່ນດຽວກັນ. (ໝາຍເຖິງ, ຖ້າຄວາມສ່ຽງສູງ ແລະ ຜູ້ຮັບຜົນບໍ່ໄດ້ປ່ຽນ, ທະນາຄານທົດສອບການຄວບຄຸມ ເພື່ອຮັບປະກັນວ່າ ການມີສ່ວນຮ່ວມຢ່າງຕໍ່ເນື່ອງບົນພື້ນຖານຄວາມຄິດທີ່ຂອງການຄວບຄຸມບໍ່ໄດ້ປ້ອງກັນການຕັດບັນຊີ). ໜີ້ສິນທາງການເງິນຖືກຕັດບັນຊີເວລາທີ່ໄດ້ຮັບການໄຖ່ຖອນ ຫຼື ສິ້ນສຸດ.

### 2.4 ການຫັກລົບເຄື່ອງມືທາງດ້ານການເງິນ

ຊັບສິນ ແລະ ໜີ້ສິນທາງດ້ານການເງິນ ແມ່ນຖືກຫັກລົບກັນ ແລະ ໄດ້ລາຍງານມູນຄ່າສຸດທິໃນໃບລາຍງານຊັບສິນຂອງທະນາຄານເມື່ອມີສິດ ຕາມກົດໝາຍ ແລະ ມີຈຸດປະສົງເພື່ອຊໍາລະ ຍອດສຸດທິ ຫຼື ການຮັບຮູ້ ຊັບສິນ ກັບການຊໍາລະໜີ້ສິນໄປພ້ອມໆກັນ.

## 2. ສະຫຼຸບລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.5 ການຮັບຮູ້ລາຍຮັບ ແລະ ລາຍຈ່າຍ

#### 2.5.1 ລາຍຮັບ ແລະ ລາຍຈ່າຍ ດອກເບ້ຍ ແລະ ປະເພດດຽວກັນ

ລາຍຮັບແລະ ລາຍຈ່າຍດອກເບ້ຍ ສຳລັບການນຳໃຊ້ເຄື່ອງມືທາງດ້ານການເງິນທີ່ມີພາລະຜູກພັນດອກເບ້ຍ ແມ່ນໄດ້ຮັບຮູ້ເປັນ 'ລາຍຮັບດອກເບ້ຍ ແລະ ລາຍຮັບປະເພດດຽວກັນ' ແລະ 'ລາຍຈ່າຍດອກເບ້ຍ ແລະ ລາຍຈ່າຍປະເພດດຽວກັນ' ໃນໃບລາຍງານຜົນໄດ້ຮັບແບບເບັດເສັດ ໂດຍການນຳໃຊ້ວິທີການດອກເບ້ຍທີ່ມີປະສິດທິຜົນ.

ວິທີການດອກເບ້ຍທີ່ມີປະສິດທິຜົນແມ່ນວິທີການຂອງການຄິດໄລ່ ດອກເບ້ຍຮັບ ຫຼື ຈ່າຍສຳລັບຊັບສິນ ຫຼື ໜີ້ສິນທາງດ້ານການເງິນ ຕະຫຼອດໄລຍະເວລາທີ່ຮັບ ຫຼື ຊຳລະ. ອັດຕາດອກເບ້ຍທີ່ມີປະສິດທິຜົນ ແມ່ນອັດຕາສ່ວນຫຼຸດທີ່ຄາດຄະເນຈາກການຮັບ ຫຼື ຈ່າຍເງິນໃນອະນາຄົດຕະຫຼອດອາຍຸຂອງສັນຍາ ຂອງເຄື່ອງມືທາງການເງິນ ຫຼື ອາຍຸຂອງ ຊັບສິນ ຫຼື ໜີ້ສິນທາງການເງິນ ຂຶ້ນກັບວ່າໄລຍະເວລາຂອງໂຕໃດທີ່ສັ້ນກວ່າ. ເມື່ອມີການຄິດໄລ່ອັດຕາດອກເບ້ຍມີປະສິດທິຜົນ, ທະນາຄານປະເມີນກະແສເງິນສົດ ໂດຍການພິຈາລະນາ ເງື່ອນໄຂທັງໝົດຂອງສັນຍາຂອງເຄື່ອງມືທາງການເງິນ (ຕົວຢ່າງທາງເລືອກໃນການຊຳລະເງິນລ່ວງໜ້າ) ແຕ່ບໍ່ໄດ້ພິຈາລະນາການສູນເສຍດ້ານການປ່ອຍສິນເຊື່ອໃນອະນາຄົດ. ການຄິດໄລ່ດັ່ງກ່າວປະກອບມີຄ່າທຳນຽມທັງຫມົດ ແລະ ຈຳນວນທີ່ຕ້ອງຈ່າຍຫຼື ໄດ້ຮັບ ລະຫວ່າງຄູ່ສັນຍານຳມາຄິດໄລ່ເປັນອັດຕາດອກເບ້ຍທີ່ມີປະສິດທິຜົນ, ລາຍຈ່າຍໃນລາຍການເຄື່ອນໄຫວ ແລະ ທັງໝົດງວດອື່ນຫຼືສ່ວນຫຼຸດ.

ເມື່ອໃດທີ່ຊັບສິນທາງດ້ານການເງິນ ທີ່ໄດ້ຕັດອອກຈາກບັນຊີ ອັນເນື່ອງມາຈາກ ການສູນເສຍຂອງຄ່າເຊື່ອມມູນຄ່າ, ລາຍຮັບດອກເບ້ຍ ແມ່ນໄດ້ຮັບຮູ້ການນຳໃຊ້ອັດຕາດອກເບ້ຍຂອງດອກເບ້ຍທີ່ໃຊ້ໃນສ່ວນຫຼຸດ ຂອງກະແສເງິນສົດໃນອະນາຄົດ ສຳລັບວັດຖຸປະສົງ ຂອງການປະເມີນ ການສູນເສຍຄ່າເຊື່ອມມູນຄ່າ.

#### 2.5.2 ລາຍຮັບ ແລະ ລາຍຈ່າຍ ຈາກຄ່າທຳນຽມ ແລະ ຄ່ານາຍໜ້າ

ຄ່າທຳນຽມ ແລະ ຄ່ານາຍໜ້າ ແມ່ນຮັບຮູ້ໂດຍທົ່ວໄປ ໂດຍເກນຄົງຄ້າງ ເມື່ອໄດ້ມີການສະໜອງການບໍລິການ. ຄ່າທຳນຽມ ສຳລັບ ເງິນໃຫ້ກູ້ຢືມ ທີ່ມີແນວໂນ້ມທີ່ຈະຖືກຖອນໄປໃຊ້ ໄດ້ຕັ້ງເປັນບັນຊີລໍຖ້າຕັດ (ພ້ອມທັງລາຍຈ່າຍທີ່ກ່ຽວຂ້ອງໂດຍກົງ) ແລະ ໄດ້ຮັບຮູ້ໂດຍການປັບປຸງກັບ ອັດຕາດອກເບ້ຍເງິນໃຫ້ກູ້ຢືມທີ່ມີປະສິດທິຜົນ.

### 2.6 ຄ່າເຊື່ອມມູນຄ່າຂອງຊັບສິນທາງການເງິນ

ທະນາຄານປະເມີນໃນຕອນທ້າຍຂອງວັນທີປິດລາຍງານວ່າຈະມີຂໍ້ບົ່ງຊີ້ທີ່ລະບຸເຖິງການເຊື່ອມມູນຄ່າຂອງຊັບສິນທາງດ້ານການເງິນຫຼື ບໍ່. ຊັບສິນທາງດ້ານການເງິນໄດ້ເຊື່ອມມູນຄ່າ ແລະ ສູນເສຍໃນການເຊື່ອມມູນຄ່າ ຈະເກີດຂຶ້ນ ຖ້າຫາກວ່າມີຫຼັກຖານລະບຸຂອງການເຊື່ອມມູນຄ່າທີ່ເປັນຜົນມາຈາກ ໜຶ່ງ ຫຼື ຫຼາຍ ເຫດການທີ່ເກີດຂຶ້ນ ຫຼັງຈາກການຮັບຮູ້ໃນເບື້ອງຕົ້ນຂອງຊັບສິນ ('ເຫດການສູນເສຍ') ແລະ ການສູນເສຍມີຜົນກະທົບຕໍ່ການຄາດຄະເນກະແສເງິນສົດຮັບຂອງຊັບສິນທາງດ້ານການເງິນໃນອະນາຄົດ ເຊິ່ງສາມາດຄາດຄະເນໄດ້ຢ່າງເໝາະສົມ.

ທະນາຄານໄດ້ປະເມີນເບື້ອງຕົ້ນວ່າມີຫຼັກຖານບົ່ງຊີ້ກ່ຽວກັບການເຊື່ອມມູນຄ່າຂອງຊັບສິນທາງການເງິນ ວ່າມີຜົນກະທົບແຕ່ລະລາຍການ ຫຼື ກະທົບຕໍ່ຊັບສິນທາງການເງິນທັງໝົດ ຖ້າທະນາຄານສະຫລຸບວ່າບໍ່ມີຫຼັກຖານທີ່ລະບຸເຖິງການເຊື່ອມມູນຄ່າຂອງຊັບສິນແຕ່ລະໂຕ ເຖິງວ່າຈະສຳຄັນຫຼື ບໍ່, ແມ່ນຖືກລວມຢູ່ໃນກຸ່ມຊັບສິນຫຼັກທີ່ມີລັກສະນະຄ້າຍຄືກັນ ຊັບສິນດັ່ງກ່າວຈະບໍ່ລວມຢູ່ໃນກຸ່ມຊັບສິນທີ່ຖືກພິຈາລະນາການເຊື່ອມມູນຄ່າ.

ຂັ້ນຕອນທຳອິດທະນາຄານຈະປະເມີນຂໍ້ມູນຫຼັກຖານຕໍ່ກັບມູນຄ່າດ້ອຍຄ່າຂອງຊັບສິນທາງການເງິນທີ່ມີມູນຄ່າສູງຂອງແຕ່ລະລາຍການ ຫຼື ການໄດ້ມາຂອງຊັບສິນທາງການເງິນ ທີ່ມີມູນຄ່າຕ່ຳ ຖ້າຫາກທະນາຄານເຫັນວ່າ ບໍ່ມີຂໍ້ມູນຫຼັກຖານຕໍ່ກັບການດ້ອຍຄ່າຂອງຊັບສິນ ບໍ່ວ່າຈະມີມູນຄ່າສູງ ຫຼື ຕ່ຳ, ແມ່ນຈະລວມຊັບສິນດັ່ງກ່າວເຂົ້າໃນກຸ່ມຊັບສິນທາງການເງິນ ທີ່ມີຄວາມສ່ຽງທາງດ້ານສິນເຊື່ອທີ່ຄ້າຍຄືກັນ ແລະ ຖືກປະເມີນວ່າມີການດ້ອຍຄ່າ. ຊັບສິນທີ່ຖືກປະເມີນການດ້ອຍຄ່າ ແລະ ມູນຄ່າເສຍຫາຍຕໍ່ກັບການດ້ອຍຄ່າ ຫຼື ທີ່ໄດ້ຮັບຮູ້ແມ່ນຈະບໍ່ລວມຢູ່ໃນການໄດ້ມາ ຂອງການປະເມີນການດ້ອຍຄ່າ.

## 2. ສະຫຼຸບລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.6 ຄ່າເຊື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

ຈຳນວນຂອງການສູນເສຍດັ່ງກ່າວແມ່ນຖືກປະເມີນດ້ວຍຄວາມແຕກຕ່າງລະຫວ່າງຈຳນວນມູນຄ່າຕາມບັນຊີຂອງຊັບສິນ ແລະ ມູນຄ່າປັດຈຸບັນຂອງການຄາດຄະເນກະແສເງິນສົດໃນອະນາຄົດ (ບໍ່ລວມເອົາການສູນເສຍດ້ານການປ່ອຍສິນເຊື່ອອະນາຄົດທີ່ຍັງບໍ່ທັນໄດ້ເກີດຂຶ້ນ) ຫຼັງຈາກທີ່ຄິດໄລ່ຫຼຸດດ້ວຍອັດຕາດອກເບ້ຍທີ່ມີປະສິດທິຜົນເບື້ອງຕົ້ນ ຂອງຊັບສິນທາງດ້ານການເງິນ. ຕາມມູນຄ່າຕາມບັນຊີຂອງຊັບສິນ ແລະ ຈຳນວນຂອງການສູນເສຍດັ່ງກ່າວແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບເບັດເສັດ. ຖ້າຫາກວ່າມີເງິນໃຫ້ກູ້ຢືມທີ່ມີອັດຕາດອກເບ້ຍທີ່ສາມາດປ່ຽນແປງໄດ້, ອັດຕາສ່ວນທີ່ໃຊ້ຄິດໄລ່ຫຼຸດ ແມ່ນອັດຕາດອກເບ້ຍມີປະສິດທິຜົນໃນປັດຈຸບັນ ກຳນົດພາຍໃຕ້ສັນຍາ. ໃນພາກປະຕິບັດ, ທະນາຄານອາດຈະປະເມີນການເຊື່ອມມູນຄ່າບົນພື້ນຖານ ຂອງມູນຄ່າຍຸດຕິທຳ ໂດຍລາຄາຕະຫຼາດທີ່ສາມາດສັງເກດໄດ້.

ຖ້າຫາກວ່າ, ໃນໄລຍະເວລາຕໍ່ມາຫຼັງຈາກນັ້ນ, ຈຳນວນຂອງການສູນເສຍຄ່າເຊື່ອມມູນຄ່າຫາກຫຼຸດລົງ ແລະ ການຫຼຸດລົງດັ່ງກ່າວເກີດຂຶ້ນຫຼັງຈາກຄ່າເຊື່ອມມູນຄ່າໄດ້ຖືກຮັບຮູ້ (ເຊັ່ນ:ການປັບປຸງອັດຕາການປ່ອຍສິນເຊື່ອຂອງລູກໜີ້), ການກັບລາຍການຂອງການສູນເສຍຄ່າເຊື່ອມມູນຄ່າທີ່ໄດ້ຖືກຮັບຮູ້ໃນເມື່ອກ່ອນແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບແບບເບັດເສັດ.

### 2.7 ຄ່າເຊື່ອມມູນຄ່າທີ່ບໍ່ແມ່ນຊັບສິນທາງດ້ານການເງິນ

ຊັບສິນບໍ່ມີຕົວຕົນ ທີ່ມີອາຍຸການໃຊ້ງານບໍ່ຈຳກັດ ແມ່ນບໍ່ຕ້ອງຫັກຄ່າເຊື່ອມມູນຄ່າ ແລະ ຕ້ອງມີການທົດສອບຄ່າເຊື່ອມມູນຄ່າປະຈຳປີ. ຊັບສິນແມ່ນໄດ້ຖືກກວດກາຄືນສຳລັບຄ່າເຊື່ອມມູນຄ່າ ເມື່ອມີເຫດການ ຫຼື ສະຖານະການທີ່ລະບຸວ່າຈຳນວນຕາມບັນຊີອາດບໍ່ສາມາດກູ້ຄືນໄດ້. ການສູນເສຍຄ່າເຊື່ອມມູນຄ່າແມ່ນໄດ້ຮັບຮູ້ຈາກຈຳນວນຕາມບັນຊີຂອງຊັບສິນ ທີ່ສູງກວ່າຈຳນວນທີ່ຈະສາມາດຮັບຄືນໄດ້. ຈຳນວນທີ່ຈະຮັບຄືນ ແມ່ນມູນຄ່າຍຸດຕິທຳຂອງຊັບສິນຫັກຕົ້ນທຶນໃນການຂາຍທຽບກັບ ມູນຄ່າໃນການໃຊ້ງານ. ສຳລັບຈຸດປະສົງຂອງການປະເມີນຄ່າເຊື່ອມມູນຄ່າຂອງຊັບສິນຈະຖືກຈັດກຸ່ມຢູ່ໃນລະດັບຕ່ຳທີ່ສຸດທີ່ມີການກຳນົດແຍກກະແສເງິນສົດ (ເງິນສົດ-ຫົວໜ່ວຍການຜະລິດ).

ການທົດສອບຄ່າເຊື່ອມມູນຄ່າສາມາດປະຕິບັດໄດ້ໃນຊັບສິນປະເພດດຽວກັນ ເມື່ອມູນຄ່າຍຸດຕິທຳຫັກຕົ້ນທຶນໃນການຂາຍ ຫຼື ມູນຄ່າໃນການໃຊ້ງານ ສາມາດກຳນົດໄດ້ຢ່າງໜ້າເຊື່ອຖື. ຊັບສິນທາງດ້ານການເງິນບໍ່ມີຕົວຕົນອື່ນໆ ນອກເໜືອຈາກຄ່ານິຍົມ ໄດ້ຮັບຜົນກະທົບຈາກຄ່າເຊື່ອມມູນຄ່າຈະໄດ້ຖືກກວດກາຄືນສຳລັບການກັບລາຍການຂອງຄ່າເຊື່ອມມູນຄ່າໃນວັນທີຂອງປິດລາຍງານ.

### 2.8 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ຍອດເຫຼືອເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທີ່ຕ່ຳກວ່າກຳນົດ ສາມ ເດືອນ ນັບຈາກວັນທີຂອງມື້ຝາກເງິນສົດ ຢູ່ໃນທະນາຄານທີ່ສາມາດຮຽກຄືນໄດ້ໃນເວລາທີ່ຕ້ອງການ ຫຼື ເງິນລົງທຶນໄລຍະສັ້ນອື່ນໆ ທີ່ມີສະພາບຄ່ອງສູງ ທີ່ມີກຳນົດເວລາ ສາມເດືອນ ຫຼື ໜ້ອຍກວ່ານັ້ນ.

### 2.9 ເງິນຝາກຕາມລະບຽບການ

ພາຍໃຕ້ຂໍ້ກຳນົດຂອງກົດໝາຍ ວ່າດ້ວຍທະນາຄານທຸລະກິດ ລົງວັນທີ 16 ມັງກອນ 2007, ທະນາຄານທຸລະກິດຕ້ອງໄດ້ແບ່ງປັນຜົນກຳໄລສຸດທິເພື່ອກອງທຶນ ສຳຮອງຕາມລະບຽບການ, ສຳຮອງ ເພື່ອຂະຫຍາຍທຸລະກິດ, ແລະ ສຳຮອງອື່ນໆ

ອີງຕາມລະບຽບເພື່ອການກ່ຽວກັບຄວາມພຽງພໍຂອງເງິນທຶນ ເລກທີ 1/ທຫລ ລົງວັນທີ 28 ສິງຫາ 2002 ອອກ ໂດຍຜູ້ວ່າທະນາຄານແຫ່ງ ສປປ ລາວ ແລະ ແນວທາງອື່ນ ທີ່ກ່ຽວຂ້ອງ ທະນາຄານທຸລະກິດຕ້ອງໄດ້ສຳຮອງເງິນຝາກຕາມລະບຽບການໃນອັດຕາ 5% ຫາ 10% ຂອງກຳໄລ ຫຼັງຫັກອາກອນ ທັງນີ້ ຂຶ້ນຢູ່ກັບການຕັດສິນຂອງຄະນະກຳມະການທະນາຄານ.

## 2. ສະຫຼຸບລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.10 ສັນຍາເຊົ່າ

ສັນຍາເຊົ່າ ບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນ ໃຫ້ແກ່ຜູ້ເຊົ່າ ຈຶ່ງຈຳແນກເປັນສັນຍາເຊົ່າທົ່ວໄປ (ສັນຍາເຊົ່າໃນການທຸລະກິດ). ການຊຳລະຄ່າເຊົ່າ ພາຍໃຕ້ສັນຍາເຊົ່າທົ່ວໄປ (ລົບທຸກລາຍການ ທີ່ໄດ້ຮັບ ຈາກຜູ້ໃຫ້ເຊົ່າ) ໄດ້ຈົດເປັນລາຍຈ່າຍ ໃນໃບລາຍງານຜົນໄດ້ຮັບ ບົນພື້ນຖານວິທີສະເລ່ຍ ຕະຫຼອດ ໄລຍະອາຍຸການເຊົ່າ.

### 2.11 ຊັບສິນຄົງທີ່

ລາຍການຂອງຊັບສົມບັດຄົງທີ່ ແມ່ນສະແດງໃນລາຄາຕົ້ນທຶນຫັກດ້ວຍຄ່າຫຼຸ້ຍຫ້ຽນສະສົມ. ລາຄາຕົ້ນທຶນເດີມລວມລາຍຈ່າຍ ທາງກົງຂອງລາຍການທີ່ຊື້ມາ.

ລາຍຈ່າຍທີ່ຕາມມາແມ່ນລວມຢູ່ໃນມູນຄ່າຕາມບັນຊີຂອງຊັບສິນຫຼື ຮັບຮູ້ເປັນຊັບສິນແຍກຕ່າງຫາກຕາມຄວາມເໝາະສົມ, ພຽງແຕ່ໃນເວລາທີ່ມັນອາດຈະເປັນຜົນປະໂຫຍດທາງເສດຖະກິດໃນອະນາຄົດທີ່ກ່ຽວຂ້ອງກັບລາຍການຈະໄຫຼເຂົ້າສູ່ທະນາຄານ ແລະ ລາຍການຂອງລາຍຈ່າຍດັ່ງກ່າວສາມາດປະເມີນໄດ້ເຖິງຄວາມໜ້າເຊື່ອຖື. ມູນຄ່າຕາມບັນຊີຂອງພາກສ່ວນທີ່ຖືກປ່ຽນແທນໄດ້ຮັບການບັນທຶກຄືນໃໝ່. ການປັບປຸງຕ່າງໆ ແລະ ຄ່າໃຊ້ຈ່າຍໃນການບຳລຸງຮັກສາທັງໝົດໄດ້ບັນທຶກໃນໃບລາຍງານຜົນໄດ້ຮັບໃນໄລຍະທີ່ເກີດມີລາຍການທາງການເງິນດັ່ງກ່າວ.

ຄ່າຫລຸ້ຍຫ້ຽນຂອງຊັບສິນຄົງທີ່ ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບເສັ້ນຊື່ ຕາມອາຍຸການນຳໃຊ້ທີ່ຄາດຄະເນຂອງຊັບສິນເຫຼົ່ານັ້ນດັ່ງລຸ່ມນີ້:

| ປະເພດຊັບສິນ | ອັດຕາຄ່າຫລຸ້ຍຫ້ຽນ |
|---|---|
| ພາຫະນະ | 20% |
| ເຄື່ອງໃຊ້ຫ້ອງການ | 20% |
| ເຟີນີເຈີ ແລະ ເຄື່ອງຕິດຕັ້ງ | 20% |
| ອາຄານ & ການປັບປຸງ | 5% |
| ອຸປະກອນຄອມພິວເຕີ | 20% |

ມູນຄ່າຄົງເຫຼືອຂອງຊັບສິນ ແລະ ອາຍຸການໃຊ້ງານ ຈະຖືກກວດຄືນ ແລະ ປັບປຸງຕາມຄວາມເໝາະສົມ ໃນວັນທີຂອງໃບສະຫຼຸບຊັບສິນຂອງທະນາຄານ.

ມູນຄ່າຕາມບັນຊີຂອງຊັບສິນແມ່ນຈະຖືກບັນທຶກໃຫ້ຕໍ່າລົງທັນທີ ຖ້າຫາກວ່າມູນຕາມບັນຊີຂອງຊັບສິນສູງກວ່າມູນຄ່າທີ່ຄາດຄະເນທີ່ຈະໄດ້ຮັບຄືນ. ມູນຄ່າທີ່ໄດ້ຮັບຄືນແມ່ນສູງກວ່າມູນຄ່າຍຸດຕິທຳຂອງຊັບສິນຫັກຕົ້ນທຶນໃນການຂາຍ ແລະ ມູນຄ່າໃນການໃຊ້ງານ. ກຳໄລ ແລະ ຂາດທຶນຈາກການຂາຍ ແມ່ນໄດ້ຖືກກຳນົດໂດຍການສົມທຽບມູນຄ່າກັບຈຳນວນຕາມບັນຊີ ລວມເຖິງລາຍຮັບ (ລາຍຈ່າຍ) ອື່ນໆ ຈາກການດຳເນີນງານໃນໃບລາຍງານຜົນໄດ້ຮັບແບບເບັດເສັດ.

### 2.12 ຊັບສິນບໍ່ມີຕົວຕົນ

ຊັບສົມບັດຄົງທີ່ບໍ່ມີຕົວຕົນປະກອບມີຄອມພິວເຕີຊອບແວແມ່ນຈົດເປັນຕົ້ນທຶນລວມເອົາລາຄາຊັບສິນ ບວກໃຫ້ຄ່າໃຊ້ຈ່າຍອື່ນໆ ທີ່ຕິດພັນໃນການຊື້ ເພື່ອໃຫ້ຊັບສິນດັ່ງກ່າວສາມາດດຳເນີນງານໄດ້. ຄອມພິວເຕີຊອບແວ ແມ່ນມີການຫັກຄ່າຫຼຸ້ຍຫ້ຽນສະສົມໃນເວລາຕໍ່ມາ ແລະ ຄ່າເຊື່ອມມູນຄ່າ. ຕົ້ນທຶນເຫຼົ່ານີ້ແມ່ນຫັກຄ່າເຊື່ອມຕະຫຼອດອາຍຸການໃຊ້ງານ 5 ເຖິງ 10 ປີ.

## 2. ສະຫຼຸບລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.13 ອາກອນປີປັດຈຸບັນ ແລະ ອາກອນກຳໄລເຍື້ອນຊຳລະ

ລາຍຈ່າຍອາກອນປະກອບດ້ວຍ ອາກອນປີປັດຈຸບັນ ແລະ ອາກອນ ເຍື້ອນຊຳລະ. ອາກອນດັ່ງກ່າວແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບ, ເວັ້ນເສຍແຕ່ສ່ວນທີ່ກ່ຽວຂ້ອງກັບລາຍການ ທີ່ຮັບຮູ້ໃນໃບລາຍງານຜົນໄດ້ຮັບແບບເບັດເສັດ ຫຼື ຮັບຮູ້ໂດຍກົງ ໃນທຶນ. ໃນກໍລະນີ ນີ້ອາກອນແມ່ນຖືກຮັບຮູ້ໃນໃບລາຍງານຜົນໄດ້ຮັບແບບເບັດເສັດ ຫຼື ທາງກົງໃນທຶນຕາມລຳດັບ.

ອາກອນກຳໄລປີປັດຈຸບັນແມ່ນໄດ້ຖືກຄິດໄລ່ຈາກພື້ນຖານອາກອນຕາມກົດໝາຍທີ່ໄດ້ປະກາດແຈ້ງການໃນໄລຍະສຸດທ້າຍຂອງການລາຍງານ ໃນບັນດາປະເທດທີ່ມີທະນາຄານດຳເນີນທຸລະກິດ ແລະ ເລີ່ມມີອາກອນລາຍຮັບ. ຜູ້ບໍລິຫານໄດ້ໃຫ້ຄວາມສຳຄັນໃນການປະເມີນກ່ຽວກັບອາກອນໂດຍອີງຕາມສະຖານະການຂອງລະບຽບການອາກອນທີ່ໄດ້ນຳໃຊ້. ອາກອນດັ່ງກ່າວໄດ້ເລີ່ມໃຫ້ມີການຄິດໄລ່ເງິນແຮໃຫ້ມີມູນຄ່າທີ່ເໝາະສົມເພື່ອສຳລັບ ການຊຳລະໃຫ້ສອດຄ່ອງກັບອາກອນ.

ອາກອນກຳໄລເຍື້ອນຊຳລະໄດ້ຮັບຮູ້ໂດຍອີງຕາມວິທີການຮັບຮູ້ແບບໜີ້ສິນ ຕາມສ່ວນຕ່າງຊົ່ວຄາວທີ່ເກີດຈາກ ຖານການຄິດໄລ່ອາກອນຊັບສິນ ຫຼື ໜີ້ສິນ ແລະ ມູນຄ່າທີ່ຍົກຍອດມາໃນເອກະສານລາຍງານການເງິນ.

ເຖິງຢ່າງໃດກໍ່ຕາມ ອາກອນລາຍຮັບເຍື້ອນຊຳລະຈະບໍ່ໄດ້ມີການບັນທຶກໃນກໍລະນີທີ່ເກີດຈາກການຮັບຮູ້ຂອງຊັບສິນ ຫຼື ໜີ້ສິນ ໃນລາຍການເຄື່ອນໄຫວທາງທຸລະກິດທີ່ນອກເໜືອຈາກການລວມກິດຈະການ ເຊິ່ງບໍ່ມີຜົນກະທົບ ກຳໄລຂາດທຶນທາງບັນຊີ ຫລືອາກອນ. ອາກອນກຳໄລເຍື້ອນຊຳລະແມ່ນໄດ້ຖືກກຳນົດຈາກອັດຕາອາກອນ (ອີງຕາມກົດໝາຍ) ທີ່ໄດ້ປະກາດແຈ້ງການໄວ້ໃນໄລຍະສຸດທ້າຍຂອງການລາຍງານ ແລະ ໄດ້ຄາດຄະເນວ່າຈະນຳໃຊ້ໃນກໍລະນີທີ່ອາກອນກຳໄລຊັບສິນເຍື້ອນຊຳລະຖືກນຳໃຊ້ ຫຼື ໄດ້ຊຳລະໜີ້ສິນກ່ອນລາຍຮັບເຍື້ອນຊຳລະ.

ອາກອນກຳໄລ ເຍື້ອນຊຳລະຊັບສິນ ແມ່ນໄດ້ຖືກບັນທຶກ ເມື່ອຄາດວ່າຈະສາມາດນຳໃຊ້ປະໂຫຍດໃນອະນາຄົດ ໂດຍທີ່ສ່ວນຕ່າງຊົ່ວຄາວສາມາດນຳໃຊ້. ຊັບສິນແລະ ໜີ້ສິນ ອາກອນກຳໄລເຍື້ອນຊຳລະ ຈະຫັກລົບໃນເມື່ອມີສິດທິບັງຄັບໃຊ້ຕາມກົດຫມາຍເພື່ອຫັກລົບ ອາກອນກຳໄລຊັບສິນ ກັບ ໜີ້ສິນອາກອນໃນ ປີປັດຈຸບັນ ແລະ ໃນເວລາອາກອນກຳໄລຊັບສິນເຍື້ອນຊຳລະແລະ ໜີ້ສິນ ໄດ້ຖືກຄິດໄລ່ໂດຍເຈົ້າໜ້າທີ່ສ່ວຍສາອາກອນ ຫຼືໜ່ວຍງານດຽວກັນ ຫຼື ໜ່ວຍງານທີ່ແຕກຕ່າງກັນແຕ່ສາມາດຊຳລະຍອດເຫຼືອສຸດທິ.

### 2.14 ຜົນປະໂຫຍດຂອງພະນັກງານ

ກ. ຜົນປະໂຫຍດຫຼັງການຈ້າງງານ

ຜົນປະໂຫຍດຫຼັງການຈ້າງງານໄດ້ຈ່າຍໃຫ້ກັບພະນັກງານເບັ້ຍບຳນານຂອງທະນາຄານໂດຍຜ່ານກອງທຶນການປະກັນສັງຄົມເຊິ່ງເປັນກະ ຊວງແຮງງານ ແລະ ສະຫວັດດີການສັງຄົມ ມີການກຳນົດເງິນສົມທົບ ຫລື ກຳນົດ ຜົນປະໂຫຍດ ບຳນານ. ທະນາຄານຈຳເປັນຕ້ອງມີການປະກອບສ່ວນໃຫ້ຜົນປະໂຫຍດການຈ້າງງານເຫຼົ່ານີ້ໂດຍການຈ່າຍຄ່າປະກັນໄພ ໃຫ້ອີງການປະກັນສັງຄົມຢູ່ໃນອັດຕາ 6.50% ຂອງເງິນພື້ນຖານຂອງພະນັກງານແຕ່ລະຄົນປະຈຳເດືອນ.

ຂ. ຜົນປະໂຫຍດເມື່ອເລີກຈ້າງ

ໂດຍອີງຕາມກົດໝາຍແຮງງານສະບັບປັບປຸງ ມາດຕາ 90 ທີ່ອອກໂດຍປະທານປະເທດຂອງ ສປປ ລາວ. ລົງວັນທີ 24 ທັນວາ 2013, ທະນາຄານມີພັນທະໃນການຈ່າຍເງິນອຸດຫນູນສຳລັບພະນັກງານທີ່ຖືກຍົກເລີກໂດຍການເລີກຈ້າງໃນກໍລະນີດັ່ງຕໍ່ໄປນີ້:

## 2. ສະຫຼຸບລວມນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

### 2.14 ຜົນປະໂຫຍດຂອງພະນັກງານ (ຕໍ່)

ຂ. ຜົນປະໂຫຍດເມື່ອເລີກຈ້າງ

- ເງິນຊົດເຊີຍສຳລັບການຍົກເລີກສັນຍາການຈ້າງງານທີ່ຈະໄດ້ຮັບແມ່ນ 10% ຂອງເງິນເດືອນ ເດືອນສຸດທ້າຍ ຄູນໃຫ້ຈຳນວນເດືອນທີ່ເຮັດວຽກ;
- ສຳລັບເງິນຊົດເຊີຍໃນການຍົກເລີກສັນຍາການຈ້າງງານ ຕາມກົດໝາຍແຮງງານສະບັບປັບປຸງ ແມ່ນຈະໄດ້ຮັບ 15% ຂອງເງິນເດືອນ ເດືອນສຸດທ້າຍຄູນໃຫ້ຈຳນວນເດືອນທີ່ເຮັດວຽກ; ແລະ
- ການຍົກເລີກສັນຍາຈ້າງງານສຳລັບເຫດຜົນທີ່ບໍ່ໄດ້ລະບຸໄວ້ໃນກົດໝາຍແຮງງານສະບັບປັບປຸງ, ທະນາຄານຕ້ອງດຳເນີນການຊົດເຊີຍຕາມສັນຍາຈ້າງງານລະຫວ່າງທະນາຄານ ແລະ ລູກຈ້າງ.

### 2.15 ເງິນແຮ

ເງິນແຮທີ່ອາດເກີດຂຶ້ນແມ່ນຖືກຮັບຮູ້ເມື່ອທະນາຄານມີພາລະຜູກພັນຮຽກຮ້ອງໃຫ້ຊຳລະ ແລະ ຈຳນວນດັ່ງກ່າວນັ້ນຕ້ອງສາມາດທີ່ຈະຄາດຄະເນໄດ້. ທະນາຄານໄດ້ຮັບຮູ້ໃຫ້ບໍ່ມີການຕັ້ງເງິນແຮເຂົ້າໃນສ່ວນການຂາດທຶນຂອງການດຳເນີນງານໃນອະນາຄົດ.

ເງິນແຮຖືກປະເມີນມູນຄ່າຕາມປັດຈຸບັນຂອງຄ່າໃຊ້ຈ່າຍທີ່ຄາດວ່າຈະໄດ້ຮັບການຮຽກຮ້ອງໃຫ້ຊຳລະພັນທະຜູກພັນໂດຍນຳໃຊ້ອັດຕາອາກອນລ່ວງໜ້າ ທີ່ສະທ້ອນໃຫ້ເຫັນການປະເມີນຜົນທາງການຕະຫຼາດໃນປັດຈຸບັນ ຂອງມູນຄ່າເງິນຕາມໄລຍະເວລາ ແລະ ຄວາມສ່ຽງສະເພາະກັບພັນທະຜູກພັນດັ່ງກ່າວ. ການເພີ່ມຂຶ້ນຂອງເງິນແຮເນື່ອງຈາກໄລຍະເວລາຜ່ານໄປແມ່ນໄດ້ຖືກຮັບຮູ້ເປັນລາຍຈ່າຍດອກເບ້ຍ.

## 3. ການປະເມີນການທາງບັນຊີທີ່ສຳຄັນ

ເອກະສານລາຍງານການເງິນຂອງທະນາຄານ ແລະ ຜົນການດຳເນີນງານ ແມ່ນໄດ້ຮັບຜົນມາຈາກຫຼັກການບັນຊີ, ຂໍ້ສົມມຸດຕິຖານ, ການປະເມີນ ແລະ ການຕັດສິນໃຈຂອງຜູ້ບໍລິຫານ, ເຊິ່ງຈຳເປັນຕ້ອງໃຊ້ໃນການກະກຽມເອກະສານລາຍງານການເງິນ.

ທະນາຄານມີການຄາດຄະເນ ແລະ ຕັ້ງຂໍ້ສົມມຸດຕິຖານທີ່ຈະມີຜົນກະທົບຕໍ່ຕົວເລກ ໃນບົດລາຍງານ ຂອງ ຊັບສິນ ແລະ ໜີ້ສິນໃນປີການເງິນຕໍ່ໄປ. ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດຕິຖານທັງໝົດ ແມ່ນຕ້ອງໄດ້ປະຕິບັດຕາມມາດຕະຖານການລາຍງານການເງິນສາກົນ ແມ່ນການປະເມີນການທີ່ດີທີ່ສຸດ ໃນການປະຕິບັດຕາມມາດຕະຖານທີ່ກ່ຽວຂ້ອງ. ການປະເມີນ ແລະ ການຕັດສິນໃຈ ຈະໄດ້ມີປະຕິບັດຢ່າງຕໍ່ເນື່ອງ ແລະ ອີງຕາມປະສົບການໃນອະດີດ ແລະ ປັດໃຈອື່ນໆ ລວມທັງການຄາດຄະເນກ່ຽວກັບເຫດການໃນອະນາຄົດ.

ຫຼັກການບັນຊີ ແລະ ການຕັດສິນໃຈຂອງຜູ້ບໍລິຫານສຳລັບບາງລາຍການທີ່ຄວາມສຳຄັນຕໍ່ຜົນການດຳເນີນງານຂອງທະນາຄານ ແລະ ຖານະທາງການເງິນທີ່ເປັນສາລະສຳຄັນ

## 3. ການປະເມີນການທາງບັນຊີທີ່ສຳຄັນ (ຕໍ່)

### ກ) ຄ່າເຊື່ອມມູນຄ່າເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ ໃຫ້ແກ່ລູກຄ້າ

ທະນາຄານທົບທວນເງິນໃຫ້ກູ້ຢືມຢ່າງໜ້ອຍປີລະຄັ້ງເພື່ອປະເມີນການຄ່າເຊື່ອມມູນຄ່າ. ໃນການກຳນົດວ່າການເຊື່ອມມູນຄ່າຄວນຈະມີການບັນທຶກຊີລົງໃນໃບລາຍງານຜົນໄດ້ຮັບຫຼື ບໍ່ນັ້ນ, ທະນາຄານຈະມີການຕັດສິນໃຈວ່າມີຂໍ້ມູນທີ່ສາມາດບົ່ງຊີ້ເຖິງສິ່ງທີ່ເຮັດໃຫ້ເກີດມີການເຊື່ອມມູນຄ່າ ຕາມດ້ວຍການລຸດລົງຂອງກະແສເງິນສົດໃນອະນາຄົດ ທີ່ຄາດຄະເນໄວ້ຈາກກຸ່ມຂອງເງິນໃຫ້ກູ້ຢືມກ່ອນທີ່ການຫຼຸດລົງນັ້ນສາມາດລະບຸໄດ້ໃນກຸ່ມເງິນໃຫ້ກູ້ຢືມດັ່ງກ່າວ. ຫຼັກຖານນີ້ສາມາດລວມເຖິງຂໍ້ມູນທີ່ບົ່ງຊີ້ວ່າມີການປ່ຽນແປງທີ່ບໍ່ປາດຖະໜາ ໃນສະຖານະພາບການຈ່າຍຂອງຜູ້ກູ້ຢືມພາຍໃນກຸ່ມ, ຫຼື ຕາມສະພາບເສດຖະກິດພາຍໃນປະເທດ ແລະທ້ອງຖິ່ນ ກ່ຽວຂ້ອງກັບເງິນຜິດຊຳລະ ໃນຊັບສິນຂອງທະນາຄານ. ຜູ້ບໍລິຫານນຳໃຊ້ການປະເມີນອີງຕາມ ປະສົບການການສູນເສຍໃນອະດີດ ສຳລັບຊັບສິນທີ່ມີລັກສະນະຂອງຄວາມສ່ຽງສິນເຊື່ອ ແລະ ຫຼັກຖານທີ່ເປັນຮູບປະທຳຂອງການເຊື່ອມມູນຄ່າຄ້າຍຄືກັນກັບບັນດາຫຼັກຖານໃນກຸ່ມເງິນໃຫ້ກູ້ຢືມ ເມື່ອສ້າງຕາຕະລາງກະແສເງິນສົດໃນອະນາຄົດ. ວິທີການ ແລະ ຂໍ້ສົມມຸດຖານທີ່ນຳໃຊ້ສຳລັບການປະເມີນ ທັງມູນຄ່າ ແລະ ໄລຍະເວລາຂອງກະແສເງິນສົດໃນອະນາຄົດນັ້ນ ແມ່ນຖືກທົບທວນຄືນຢ່າງເປັນປົກກະຕິເພື່ອຫລຸດຜ່ອນສ່ວນຕ່າງລະຫວ່າງ ການສູນເສຍທີ່ຄາດຄະເນໄວ້ ກັບການສູນເສຍທີ່ເກີດຂຶ້ນຕົວຈິງ.

### ຂ) ສ່ວຍສາອາກອນ

ລະບົບສ່ວຍສາອາກອນ ໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີລັກສະນະເປັນຫຼາຍປະເພດອາກອນ ແລະ ຂ້ອນຂ້າງມີການປ່ຽນແປງກົດໝາຍເລື້ອຍໆ ແລະ ອາດຖືກຕີຄວາມໝາຍເພີ່ມເຕີມ. ອາກອນແມ່ນຂຶ້ນກັບການທົບທວນ ແລະ ການກວດກາຕົວເລກ ໂດຍເຈົ້າໜ້າທີ່ ທີ່ກຳນົດຕາມກົດຫມາຍ, ເພື່ອການປັບໄໝ, ລົງໂທດ ແລະ ອັດຕາສ່ວນໄດ້ສ່ວນເສຍ. ສິ່ງເຫຼົ່ານີ້ອາດຈະສ້າງຄວາມສ່ຽງຕໍ່ລະບົບອາກອນໃນ ສປປ ລາວ ຫຼາຍຂຶ້ນ ແລະ ເຫັນວ່າເປັນເລື່ອງທີ່ສຳຄັນຫຼາຍ ກວ່າໃນປະເທດອື່ນໆ. ຜູ້ບໍລິຫານເຊື່ອໝັ້ນວ່າ ໄດ້ສະຫນອງພັນທະທາງອາກອນຢ່າງພຽງພໍ ໂດຍອີງໃສ່ການຕີຄວາມໝາຍຂອງກົດຫມາຍອາກອນ. ເຖິງຢ່າງໃດກໍຕາມ ໜ່ວຍງານທີ່ກ່ຽວຂ້ອງອາດຈະມີການຕີຄວາມແຕກຕ່າງກັນ ແລະ ອາດມີຜົນກະທົບທີ່ເປັນບັນຫາສຳຄັນ.

## 4. ນະໂຍບາຍການບໍລິຫານຄວາມສ່ຽງທາງດ້ານການເງິນ

ທຸລະກິດຂອງທະນາຄານ ທີ່ກ່ຽວຂ້ອງກັບຄວາມສ່ຽງໃນລັກສະນະທີ່ມີກຳນົດເປົ້າຫມາຍ ແລະ ການບໍລິຫານຄວາມສ່ຽງແບບມືອາຊີບ. ຫຼັກຂອງການບໍລິຫານຄວາມສ່ຽງຂອງທະນາຄານແມ່ນກຳນົດຄວາມສ່ຽງທີ່ສຳຄັນທັງຫມົດສຳລັບທະນາຄານ, ໃນການປະເມີນຄວາມສ່ຽງເຫຼົ່ານີ້, ການບໍລິຫານຄວາມສ່ຽງຕໍ່ຕຳແໜ່ງ ແລະ ການກຳນົດການຈັດສັນທຶນ. ທະນາຄານທົບທວນຄືນເປັນປົກກະຕິກ່ຽວກັບລະບົບ ແລະ ນະໂຍບາຍການບໍລິຫານຄວາມສ່ຽງ ສະທ້ອນໃຫ້ເຫັນເຖິງການປ່ຽນແປງໃນຕະຫຼາດ, ຜະລິດຕະພັນ, ແລະ ການປະຕິບັດການທີ່ດີທີ່ສຸດໃນຕະຫຼາດ.

ຈຸດປະສົງຂອງທະນາຄານແມ່ນເພື່ອບັນລຸ ຍອດເຫຼືອທີ່ເຫມາະສົມລະຫວ່າງຄວາມສ່ຽງ ແລະ ຜົນຕອບແທນ ແລະຫຼຸດຜ່ອນຜົນກະທົບທາງລົບທີ່ອາດມີຕໍ່ການປະຕິບັດທາງດ້ານການເງິນຂອງທະນາຄານ.

ທະນາຄານໄດ້ກຳນົດຄວາມສ່ຽງທີ່ເປັນໄປໄດ້ຂອງການຂາດທຶນຫຼືກຳໄລ ລ່ວງໜ້າ, ຊຶ່ງອາດຈະເກີດຈາກປັດໄຈພາຍໃນ ຫຼື ພາຍນອກ

ການບໍລິຫານຄວາມສ່ຽງຈະຖືກດຳເນີນງານໂດຍພະແນກບໍລິຫານຄວາມສ່ຽງພາຍໃຕ້ນະໂຍບາຍທີ່ໄດ້ຮັບການອະນຸມັດໂດຍສະພາຜູ້ບໍລິຫານ ແລະ ຄະນະກຳມະການ. ການດຳເນີນງານຂອງພະແນກບໍລິຫານຄວາມສ່ຽງໄດ້ລະບຸ, ປະເມີນ ແລະ ປ້ອງກັນຄວາມສ່ຽງທາງດ້ານການເງິນໃນການຮ່ວມມືຢ່າງໃກ້ຊິດໃນການດຳເນີນງານ ຂອງຫນ່ວຍປະຕິບັດງານຂອງທະນາຄານ. ສະພາຜູ້ບໍລິຫານ ສະຫນອງຫຼັກການເປັນລາຍລັກອັກສອນສຳລັບການບໍລິຫານຄວາມສ່ຽງໂດຍລວມ, ເຊັ່ນດຽວກັນກັບນະໂຍບາຍທີ່ເປັນລາຍລັກອັກສອນ ເຊິ່ງກວມເອົາເລື່ອງທີ່ລະບຸ, ເຊັ່ນ: ຄວາມສ່ຽງຈາກອັດຕາແລກປ່ຽນ, ຄວາມສ່ຽງຈາກອັດຕາດອກເບ້ຍ, ຄວາມສ່ຽງຈາກສິນເຊື່ອ, ການນຳໃຊ້ເຄື່ອງມືທາງດ້ານການເງິນທີ່ເປັນ Derivative ແລະ non-derivative. ນອກຈາກນັ້ນ, ການກວດສອບພາຍໃນແມ່ນຮັບຜິດຊອບສຳລັບການກວດກາໃນການບໍລິຫານຄວາມສ່ຽງ ແລະ ການຄວບຄຸມສະພາບແວດລ້ອມ.

## 4. ນະໂຍບາຍການບໍລິຫານຄວາມສ່ຽງທາງດ້ານການເງິນ (ຕໍ່)

ຄວາມສ່ຽງທີ່ເກີດຂຶ້ນຈາກເຄື່ອງມືທາງການເງິນທີ່ທະນາຄານໄດ້ເປີດເຜີຍແມ່ນຄວາມສ່ຽງທາງການເງິນ, ເຊິ່ງລວມເຖິງຄວາມສ່ຽງດ້ານສິນເຊື່ອ, ຄວາມສ່ຽງດ້ານສະພາບຄ່ອງ, ຄວາມສ່ຽງດ້ານຕະຫຼາດ (ເຊິ່ງໄດ້ເປີດເຜີຍໄວ້ຂ້າງລຸ່ມ) ແລະ ຄວາມສ່ຽງດ້ານການດຳເນີນງານ.

### 4.1 ຄວາມສ່ຽງດ້ານສິນເຊື່ອ

ຄວາມສ່ຽງດ້ານສິນເຊື່ອ ແມ່ນການສູນເສຍທີ່ອາດເກີດຂຶ້ນ ຂອງລາຍຮັບ ແລະ ຕົ້ນທຶນ ໃນຮູບແບບຂອງການຕັ້ງສຳຮອງທີ່ລູກໜີ້ ຫຼື ຄູ່ສັນຍາຂອງທະນາຄານ ບໍ່ສາມາດປະຕິບັດໄດ້ຕາມສັນຍາທີ່ກ່ຽວຂ້ອງກັບການໃຫ້ສິນເຊື່ອການລົງທຶນ ຜົນເສຍຫາຍສູງສຸດຂອງຄວາມສ່ຽງດ້ານສິນເຊື່ອເກີດຈາກເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າ. ເຊິ່ງຜົນເສຍຫາຍ ແມ່ນໝາຍເຖິງມູນຄ່າຕາມບັນຊີຂອງຊັບສິນໃນໃບສະຫລຸບຊັບສິນບັດ. ທະນາຄານໄດ້ກຳນົດນະໂຍບາຍສິນເຊື່ອເພື່ອຄວບຄຸມຄວາມສ່ຽງດ້ານສິນເຊື່ອເຊັ່ນຄວາມສາມາດໃນການຊຳລະຄືນເງິນກູ້ ລວມເຖິງລະດັບຄວາມສ່ຽງຂອງສິນເຊື່ອນະໂຍບາຍສິນເຊື່ອໄດ້ລະບຸເຖິງ ນະໂຍບາຍການໃຫ້ກູ້ຢືມ, ນະໂຍບາຍ. ເອກະສານທີ່ມີການຄວບຄຸມດ້ານສິນເຊື່ອ ແລະ ຄູ່ມືການກູ້ຄືນດ້ານສິນເຊື່ອ, ຄູ່ມືການດຳເນີນງານດ້ານສິນເຊື່ອ ແລະ ຄູ່ມືນະໂຍບາຍດ້ານສິນເຊື່ອ.

ຄວາມສ່ຽງທາງດ້ານສິນເຊື່ອແມ່ນຄວາມສ່ຽງດຽວທີ່ໃຫຍ່ທີ່ສຸດ ສຳລັບທຸລະກິດຂອງທະນາຄານ. ດັ່ງນັ້ນ ຜູ້ບໍລິຫານຈຶ່ງມີການຈັດການຢ່າງລະມັດລະວັງ ກ່ຽວກັບຜົນເສຍຫາຍດ້ານສິນເຊື່ອ.

#### 4.1.1 ການປະເມີນຄວາມສ່ຽງທາງດ້ານສິນເຊື່ອ

**ກ) ເງິນກູ້ຢືມ ແລະ ເງິນລ່ວງໜ້າໃຫ້ແກ່ລູກຄ້າ**

ການວັດລະດັບພາຍໃນຂອງທະນາຄານ ແລະ ການປຽບທຽບຂອງການວັດລະດັບພາຍນອກ ໂດຍການປະເມີນຂອງທະນາຄານໂດຍຜ່ານການນຳໃຊ້ເຄື່ອງມືການວັດລະດັບພາຍໃນ ດັ່ງລຸ່ມນີ້:

| ປະເພດຂອງໜີ້ | ຈຳນວນມື້ເກີນກຳນົດ |
|---|---|
| **ສິນເຊື່ອທີ່ກໍ່ໃຫ້ເກີດລາຍໄດ້** | |
| ກ – ໜີ້ປົກກະຕິ ຫຼື ອ່າກາຍກຳນົດ | ເງິນກູ້ຢືມທີ່ຄ້າງຊຳລະທີ່ຕ່ຳກວ່າ (30) ມື້ ຕາມຂໍ້ກຳນົດຕົກລົງໃນເງື່ອນໄຂຂອງສັນຍາເງິນກູ້ຢືມ ບໍ່ວ່າຈະເປັນດອກເບ້ຍ ຫຼື ເງິນຕົ້ນ. |
| ຂ – ຕ້ອງມີການຕິດຕາມໃນການຊຳລະເງິນກູ້ | ເງິນກູ້ຢືມທີ່ຄ້າງຊຳລະຫຼາຍກວ່າ (30) ມື້ ຈົນເຖິງ (90) ມື້ ຕາມຂໍ້ກຳນົດຕົກລົງໃນເງື່ອນໄຂຂອງສັນຍາເງິນກູ້ຢືມ ບໍ່ວ່າຈະເປັນດອກເບ້ຍ ຫຼື ເງິນຕົ້ນ. |
| **ສິນເຊື່ອທີ່ບໍ່ກໍ່ໃຫ້ເກີດລາຍໄດ້** | |
| **ຄ – ຕ່ຳກວ່າການປະເມີນ** | ເງິນກູ້ຢືມທີ່ຄ້າງຊຳລະທີ່ຫຼາຍກວ່າ (90) ມື້ ທີ່ບໍ່ເຖິງ (180) ມື້ ຕາມຂໍ້ກຳນົດຕົກລົງໃນເງື່ອນໄຂຂອງສັນຍາເງິນກູ້ຢືມ ບໍ່ວ່າຈະເປັນດອກເບ້ຍ ຫຼື ເງິນຕົ້ນ. ລາຍໄດ້ຫຼັກຂອງຜູ້ທີ່ກູ້ຢືມບໍ່ພຽງພໍສຳລັບການຈ່າຍຊຳລະຄືນເງິນກູ້ ເຊິ່ງຜູ້ກູ້ຍັງຕ້ອງໄດ້ອາໄສລາຍໄດ້ຈາກທີ່ອື່ນມາທົດແທນ ເຊັ່ນ ການຂາຍຫຼັກຊັບຄ້ຳປະກັນ,ຊັບສິນອື່ນໆຂອງຜູ້ກູ້ ຫຼື ນຳໃຊ້ແຫຼ່ງທີ່ມາຂອງເງິນທຶນຈາກພາຍນອກ. |
| **ງ – ໜີ້ສົງໃສຈະເສຍ** | ເງິນກູ້ຢືມທີ່ຄ້າງຊຳລະທີ່ຫຼາຍກວ່າ (180) ມື້ ທີ່ບໍ່ເຖິງ (360) ມື້ ຕາມຂໍ້ກຳນົດຕົກລົງໃນເງື່ອນໄຂຂອງສັນຍາເງິນກູ້ຢືມ ບໍ່ວ່າຈະເປັນດອກເບ້ຍ ຫຼື ເງິນຕົ້ນ. |
| **ຈ – ການຂາດທຶນ** | ເງິນໃຫ້ກູ້ຢືມທີ່ຄ້າງຊຳລະໃດໆທີ່ຢູ່ໃນຕາມຂໍ້ກຳນົດຕົກລົງໃນເງື່ອນໄຂຂອງສັນຍາເງິນໃຫ້ກູ້ຢືມ ບໍ່ວ່າຈະເປັນດອກເບ້ຍ ຫຼື ເງິນຕົ້ນ ເກີນ (360) ມື້ ລວມເຖິງເງິນກູ້ທີ່ພິຈາລະນາວ່າບໍ່ສາມາດຮຽກເກັບໄດ້ບາງສ່ວນ ຫຼື ທັງໝົດຂອງເງິນກູ້ ທີ່ບໍ່ມີການຄ້ຳປະກັນກູ້ດັ່ງກ່າວ. |

## 4. ນະໂຍບາຍການບໍລິຫານຄວາມສ່ຽງທາງດ້ານການເງິນ (ຕໍ່)

### 4.1 ຄວາມສ່ຽງດ້ານສິນເຊື່ອ (ຕໍ່)

#### 4.1.1 ການປະເມີນຄວາມສ່ຽງທາງດ້ານສິນເຊື່ອ (ຕໍ່)

ການປະເມີນຄວາມສ່ຽງທາງດ້ານສິນເຊື່ອ ທີ່ໄດ້ກ່າວມາຂ້າງເທິງສະທ້ອນໃຫ້ເຫັນການສູນເສຍທີ່ຄາດວ່າຈະມີ (ຮູບແບບຄວາມເສຍຫາຍທີ່ຄາດວ່າຈະເກີດຂຶ້ນ) ຕາມ ທະນາຄານແຫ່ງ ສປປ ລາວ ແລະ ກຳນົດໃນລະບຽບການເລກທີ 324/ທຫລ. ການປະເມີນການດຳເນີນງານສາມາດປຽບທຽບໃຫ້ເຫັນຄວາມແຕກຕ່າງກັບຄ່າເພື່ອຄ່າເຊື່ອມມູນຄ່າ ທີ່ຖືກກຳນົດພາຍໃຕ້ມາດຕະຖານການບັນຊີສາກົນ ທີ່ກ່ຽວຂ້ອງ (IAS), ເຊິ່ງແມ່ນອີງໃສ່ການສູນເສຍທີ່ເກີດຂຶ້ນໃນມື້ຂອງໃບສະຫລຸບຊັບສົມບັດ (ຮູບແບບຄວາມເສຍຫາຍທີ່ເກີດຂຶ້ນ) ຫຼາຍກວ່າຄວາມເສຍຫາຍທີ່ຄາດວ່າຈະເກີດຂຶ້ນ. ໃນທາງກົງກັນຂ້າມ, ຄ່າເພື່ອຄ່າເຊື່ອມມູນຄ່າແມ່ນໄດ້ຮັບຮູ້ສຳລັບວັດຖຸປະສົງຂອງການລາຍງານການເງິນສະເພາະສຳລັບການສູນເສຍທີ່ເກີດຂຶ້ນໃນມື້ຂອງ ໃບສະຫລຸບຊັບສົມບັດຕາມຫຼັກຖານຂອງຄ່າເຊື່ອມມູນຄ່າ. ເນື່ອງຈາກ ວິທີການທີ່ແຕກຕ່າງກັນໃນການນຳໃຊ້, ຄ່າເພື່ອ ຄ່າເຊື່ອມມູນຄ່າ ທີ່ໄດ້ຖືກກຳນົດສຳລັບຈຸດປະສົງລະບຽບການທະນາຄານ ແມ່ນຈະສູງກວ່າຈຳນວນເງິນທີ່ກຳນົດຈາກຮູບແບບການເສຍຫາຍທີ່ເກີດຂຶ້ນ.

#### 4.1.2 ການຄວບຄຸມຂອບເຂດຂອງຄວາມສ່ຽງ ແລະ ວິທີການຫລຸດຜ່ອນຜົນກະທົບ

ທະນາຄານມີການຈັດການ, ຈຳກັດ ແລະ ຄວບຄຸມໃນດ້ານຄວາມສ່ຽງທາງດ້ານສິນເຊື່ອ ໂດຍໄດ້ຖືກກຳນົດ - ໂດຍສະເພາະ, ແຕ່ລະຄູ່ຄ້າສັນຍາ ແລະ ກຸ່ມ ແລະ ພາກອຸດສາຫະກຳ ແລະ ບັນດາປະເທດ.

